ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ　　　　　　　　　　　　　　ເລກທີ 121 /ນ.ຍ

# ດຳລັດ
# ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການເພີ່ມທະວີວຽກງານແຂ່ງຂັນ-ຍ້ອງຍໍໃນໄລຍະໃໝ່

---

- ອີງຕາມລັດຖະທຳມະນູນແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ່ VII, ມາດ ຕາ 70, ຂໍ້ 5
- ອີງຕາມລັດຖະດຳລັດຂອງປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 011/ປປທ,ລົງວັນທີ 20 ເດືອນ 1 ປີ 2010, ວ່າດ້ວຍການເປີດຂະບວນການງານແຂ່ງຂັນ - ຍ້ອງຍໍທົ່ວປະເທດໃນໄລຍະໃໝ່.
- ອີງຕາມກົດໝາຍລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ II, ມາດ ຕາ 7, ຂໍ້ 7.

ນາຍົກລັດຖະມົນຕີ

ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກດຳລັດ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ1. ຈຸດໝາຍຂອງການແຂ່ງຂັນ-ຍ້ອງຍໍ**

ເພື່ອປຸກລະດົມເຕົ້າໂຮມກຳລັງແຮງຂອງທຸກພາກສ່ວນໃນທົ່ວສັງຄົມ, ເຊີດຊູມູນເຊື້ອຮັກຊາດ, ຄວາມພິລະອາດຫານ, ນ້ຳໃຈດຸໝັ່ນ, ປະຢັດ, ຊື່ສັດ, ອົດທົນ, ປະດິດສ້າງ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າ, ແຂ່ງຂັນກັນປະຕິບັດສອງໜ້າທີ່ຍຸດທະສາດ: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ສູ້ຊົນປະຕິບັດບັນດາຄາດໝາຍທີ່ພັກ ແລະ ລັດວາງອອກ

ແຕ່ລະໄລຍະເປັນຕົ້ນແມ່ນການລຶບລ້າງຄວາມທຸກຍາກ, ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ເພື່ອພາປະເທດຊາດຫຼຸດພົ້ນຈາກຄວາມດ້ອຍພັດທະນາປີ 2020;

ເຮັດໃຫ້ຄົນລາວທຸກຄົນ,ທຸກການຈັດຕັ້ງມີຄວາມບຸກບືນແຂ່ງຂັນພັດທະນາຕົນເອງໃນທຸກດ້ານ ແລະ ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດຕາມຄາດໝາຍທີ່ພັກ-ລັດເຮົາວາງໄວ້.

**ມາດຕາ 2. ເປົ້າໝາຍຂອງການແຂ່ງຂັນ-ຍ້ອງຍໍ**

ເພື່ອຍ້ອງຍໍບຸກຄົນ, ການຈັດຕັ້ງຢູ່ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຄົນລາວຢູ່ຕ່າງປະເທດ,ບຸກຄົນ ແລະ ການຈັດຕັ້ງຂອງຕ່າງປະເທດທີ່ໄດ້ປະກອບສ່ວນໃຫ້ແກ່ພາລະກິດປົກປັກ ຮັກສາ ແລະ ພັດທະນາປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 3. ຈຸດປະສົງຂອງການແຂ່ງຂັນ-ຍ້ອງຍໍ**

1. ເພື່ອສ້າງພົນລະເມືອງລາວທຸກຄົນມີສະຕິຊາດ, ສະຕິເອກະລາດ, ເປັນເຈົ້າຕົນເອງ, ມີຈິດໃຈປະຢັດມັດທະຍັດ, ມີຄວາມດຸໝັ່ນຄົ້ນຄ້ວາຮ່ຳຮຽນ, ດຸໝັ່ນໃນການອອກແຮງງານ, ຍົກສູງສະຕິຕື່ນຕົວ, ນ້ຳໃຈບຸກບືນ ແລະ ສ້າງໃຫ້ມີຕົວແບບດີເດັ່ນກ້າວໜ້າ;

2. ເພື່ອຫັນເອົາວຽກງານແຂ່ງຂັນ-ຍ້ອງຍໍເຂົ້າສູ່ລະບົບລະບຽບທີ່ເປັນເອກະພາບໃນທົ່ວປະເທດ, ເຮັດໃຫ້ການຍ້ອງຍໍຕິດພັນກັບການແຂ່ງຂັນ, ສົ່ງເສີມຊຸກຍູ້ວຽກດີຄົນເດັ່ນໂດຍຜ່ານຂະບວນການແຂ່ງຂັນທີ່ມີການຈັດຕັ້ງ, ມີເນື້ອໃນ ແລະ ຄາດໝາຍສູ້ຊົນຈະແຈ້ງ.

3. ເຮັດໃຫ້ທຸກແນວທາງແຜນນະໂຍບາຍ, ລະບຽບກົດໝາຍ, ບັນດາຄາດໝາຍສູ້ຊົນທີ່ພັກ-ລັດວາງອອກແຕ່ລະໄລຍະໄດ້ຮັບການຈັດຕັ້ງປະຕິບັດບົນຈິດໃຈມີການແຂ່ງຂັນຢ່າງເປັນຂະບວນຟົດຟື້ນ ຂອງທຸກກະຊວງ, ອົງການ, ທ້ອງຖິ່ນ, ຮາກຖານ ແລະ ທຸກພາກສ່ວນເສດຖະກິດ, ແນໃສ່ເຮັດໃຫ້ແນວທາງແຜນນະໂຍບາຍຂອງພັກ-ລັດວາງອອກແຕ່ລະໄລຍະເກີດຜົນຕົວຈິງໃນຊີວິດສັງຄົມ;

4. ເພື່ອຈົດຈຳບຸນຄຸນ, ຄຸນງາມຄວາມດີ, ຜົນງານຂອງບຸກຄົນ ແລະ ການຈັດຕັ້ງທີ່ໄດ້ອຸທິດສະຕິປັນຍາ, ເຫື່ອແຮງຂອງຕົນໃຫ້ແກ່ພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະ ສ້າງສາປະເທດຊາດ, ທັງເປັນການກະຕຸກຊຸກຍູ້ໃຫ້ທຸກຄົນ ແລະ ທຸກການຈັດຕັ້ງມີການແຂ່ງຂັນກັນ, ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ;

5. ເພື່ອເສີມຂະຫຍາຍສະຕິປັນຍາ, ຫົວຄິດປະດິດສ້າງຂອງທຸກຊັ້ນຄົນໃນສັງຄົມ; ດຶງດູດເອົາທຶນຮອນ, ບົດຮຽນທີ່ດີຈາກພາຍໃນ ແລະ ຕ່າງປະເທດປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດໃຫ້ຈະເລີນກ້າວໜ້າ.

**ມາດຕາ 4. ຫຼັກການຂອງການແຂ່ງຂັນ**

1. ການແຂ່ງຂັນຕ້ອງມີຈຸດປະສົງ, ຄາດໝາຍ, ເນື້ອໃນ, ມາດຖານ, ໄລຍະເວລາ ແລະ ວິທີການທີ່ຈະແຈ້ງ.

2. ການແຂ່ງຂັນຕ້ອງຢູ່ໃນຂອບເຂດຂອງລັດຖະທຳມະນູນ, ກົດໝາຍ ແລະ ຂໍ້ກຳນົດຕ່າງໆໄດ້ກຳນົດໄວ້.

3. ການແຂ່ງຂັນຕ້ອງຕື່ນຕົວ, ເປັນເຈົ້າການ, ມີຄວາມຮັບຜິດຊອບ, ມີຄວາມສາມັກຄີ, ຮ່ວມມື ແລະ ພ້ອມກັນພັດທະນາ.

**ມາດຕາ 5. ຫຼັກການຂອງການຍ້ອງຍໍ**

1. ການຍ້ອງຍໍຕ້ອງຊັດເຈນ, ເປີດເຜີຍ, ສະເໝີພາບ, ຍຸດຕິທຳ ແລະ ທັນການ.

2. ຮູບການ(ວັດຖຸ)ຍ້ອງຍໍໜຶ່ງໆອາດຈະມອບເທື່ອດຽວ ຫຼື ຫຼາຍເທື່ອໃຫ້ແກ່ເປົ້າໝາຍດຽວ.

3. ຮັບປະກັນຄວາມເປັນເອກະພາບລະຫວ່າງເນື້ອໃນ, ຮູບການ ແລະ ເປົ້າໝາຍການຍ້ອງຍໍ.

4. ສົມທົບແໜ້ນລະຫວ່າງການປຸກລະດົມທາງດ້ານຈິດໃຈກັບການກະຕຸກຊຸກຍູ້ທາງດ້ານວັດຖຸ.

**ມາດຕາ 6. ບ່ອນອີງຂອງການຍ້ອງຍໍ**

1. ຕ້ອງອີງໃສ່ເຫດການ ແລະ ມີຂະບວນແຂ່ງຂັນທີ່ພົ້ນເດັ່ນໃນໄລຍະເວລາທີ່ແນ່ນອນ.
2. ຕ້ອງອີງໃສ່ແຜນການ, ໂຄງການ, ແຜນງານຂອງການແຂ່ງຂັນທີ່ໄດ້ກຳນົດໄວ້.
3. ຕ້ອງອີງໃສ່ການກຳນົດຂອບເຂດ, ຂະໜາດຂອງການແຂ່ງຂັນໃຫ້ຊັດເຈນ.
4. ຕ້ອງອີງໃສ່ຜົນງານ ແລະ ຜົນສຳເລັດຕົວຈິງຂອງການແຂ່ງຂັນ.
5. ຕ້ອງຍຶດໝັ້ນບົນພື້ນຖານມາດຕະຖານຂອງການແຂ່ງຂັນ-ຍ້ອງຍໍທີ່ວາງໄວ້.
6. ຜົນໄດ້ຮັບມາຈາກຂະບວນການແຂ່ງຂັນບໍ່ສົ່ງຜົນສະທ້ອນເຖິງສິ່ງແວດລ້ອມ,ບໍ່ກະທົບເຖິງສະຖຽນລະພາບຂອງປະເທດຊາດ ແລະ ຄວາມສະຫງົບປອດໄພຂອງສັງຄົມ.
7. ອີງໃສ່ສະພາບຈຸດພິເສດດ້ານທີ່ຕັ້ງ, ເງື່ອນໄຂ, ກາລະໂອກາດ ແລະ ສິ່ງແວດລ້ອມອື່ນໆຂອງການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບການມອບໝາຍ.

**ມາດຕາ 7. ລະບຽບການຍ້ອງຍໍ**

ລັດປະຕິບັດການຍ້ອງຍໍສັນລະເສີນໂດຍຜ່ານການສະຫຼຸບຕີລາຄາຜົນງານທີ່ໄດ້ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດໃນແຕ່ລະໄລຍະ.

ການຍ້ອງຍໍແມ່ນຍ້ອງຍໍປົກກະຕິຕາມໄລຍະເວລາຂອງການແຂ່ງຂັນ, ຍ້ອງຍໍບັງເອີນ ( ຮີບດ່ວນ) ແລະ ຍ້ອງຍໍຕາມຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານ; ການຍ້ອງຍໍມີທັງການຍ້ອງຍໍບຸກຄົນ, ການຈັດຕັ້ງພາຍໃນ ແລະ ມີທັງການຍ້ອງຍໍຕໍ່ຕ່າງປະເທດ.

\+ **ການຍ້ອງຍໍພາຍໃນປະເທດ:** ແມ່ນການຍ້ອງຍໍບຸກຄົນ ຫຼື ການຈັດຕັ້ງ, ຊຶ່ງລວມມີການຍ້ອງຍໍປົກກະຕິຕາມໄລຍະເວລາຂອງການແຂ່ງຂັນ, ການຍ້ອງຍໍບັງເອີນ ແລະ ການຍ້ອງຍໍຕາມໄລຍະເວລາຂອງການປະຕິບັດໜ້າທີ່ວຽກງານ.

- ຍ້ອງຍໍເປັນປົກກະຕິ : ແມ່ນການຍ້ອງຍໍປະຈຳປີ ຫຼື ການຍ້ອງຍໍຕາມຂະບວນການຂອງການປະຕິບັດໜ້າທີ່ວຽກງານ .
- ຍ້ອງຍໍບັງເອີນ: ແມ່ນການຍ້ອງຍໍຕາມເຫດການເກີດຂຶ້ນໂດຍບັງເອີນ ຫຼື ການຍ້ອງຍໍທີ່ມີລັກ ສະນະເລັ່ງດ່ວນ.
- ຍ້ອງຍໍຕາມແຕ່ລະຂັ້ນ: ແມ່ນການການຍ້ອງຍໍຜູ້ທີ່ມີຜົນງານດີເດັ່ນ, ມີຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບການມອບໝາຍໃນຂັ້ນໃດໜຶ່ງ ຫລື ໄລຍະເວລາໃດໜຶ່ງທີ່ແນ່ນອນ.

\+ **ການຍ້ອງຍໍຕໍ່ຕ່າງປະເທດ:** ແມ່ນການຍ້ອງຍໍບຸກຄົນ ຫຼື ການຈັດຕັ້ງຂອງຕ່າງປະເທດທີ່ໄດ້ເສີມສ້າງສາຍພົວພັນມິດຕະພາບອັນດີງາມ, ໄດ້ອຸທິດ ແລະ ປະກອບສ່ວນທາງດ້ານວັດຖຸ ແລະ ຈິດໃຈໃຫ້ແກ່ພາລະກິດປົກປັກຮັກສາ ແລະ ພັດທະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 8. ຄວາມຮັບຜິດຊອບຕໍ່ວຽກງານແຂ່ງຂັນ-ຍ້ອງຍໍ**

1. ລັດສະໜອງງົບປະມານທີ່ເໝາະສົມໃຫ້ແກ່ວຽກງານແຂ່ງຂັນ-ຍ້ອງຍໍ;ໃຫ້ການສົ່ງເສີມ,

ຍ້ອງຍໍສັນລະເສີນທາງດ້ານວັດຖຸ, ຈິດໃຈຂອງບຸກຄົນ ແລະ ການຈັດຕັ້ງທັງຄົນລາວ ແລະ ຄົນຕ່າງປະເທດທີ່ມີຜົນງານດີເດັ່ນໃນການປະກອບສ່ວນໃຫ້ແກ່ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

2. ບັນດາອົງການຈັດຕັ້ງຂອງພັກ - ລັດ, ແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ ແລະ ສັງຄົມທຸກຂັ້ນມີໜ້າທີ່ ແລະ ຄວາມຮັບຜິດຊອບຄື :

- ຈັດຕັ້ງສ້າງຂະບວນການແຂ່ງຂັນໂດຍຕິດພັນກັບການອອກແຮງງານ, ການຜະລິດ, ປະຢັດມັດທະຍັດ, ປະດິດສ້າງ, ການຮ່ຳຮຽນ, ການປະຕິບັດວຽກງານວິຊາສະເພາະ, ການສູ້ຮົບ, ຮັບໃຊ້ສູ້ຮົບ, ແນໃສ່ຮັບປະກັນໃຫ້ແກ່ການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

- ໂຄສະນາປຸກລະດົມຂົນຂວາຍທຸກອົງການຈັດຕັ້ງ, ທຸກພາກສ່ວນເສດຖະກິດ, ທຸກຊົນເຜົ່າ, ຊັ້ນຄົນຕ່າງໆເຂົ້າຮ່ວມຂະບວນການແຂ່ງຂັນ-ຍ້ອງຍໍ, ໂຄສະນາເຜີຍແຜ່ວຽກດີຄົນເດັ່ນ ແລະ ບັນດາຕົວແບບທີ່ກ້າວໜ້າ.

- ຕິດຕາມ, ກວດກາ, ຊຸກຍູ້ຂະບວນການເຄື່ອນໄຫວແຂ່ງຂັນ, ຕີລາຄາຜົນຂອງການແຂ່ງຂັນແຕ່ລະໄລຍະຕາມຂອບເຂດຂອງຕົນຮັບຜິດຊອບ.

- ປະເມີນຜົນ, ເລືອກເຟັ້ນ, ປະຕິບັດການຍ້ອງຍໍສັນລະເສີນບຸກຄົນ ແລະ ການຈັດຕັ້ງທີ່ມີຜົນສຳເລັດໃນການແຂ່ງຂັນຄື : ການອອກແຮງງານຜະລິດຜົນ, ການຄົ້ນຄວ້າ-ປະດິດສ້າງ, ການສຶກສາ ຮ່ຳຮຽນ ແລະ ການປະຕິບັດໜ້າທີ່ວຽກງານຕ່າງໆທີ່ໄດ້ຮັບມອບໝາຍ.

3. ຄະນະຮັບຜິດຊອບຊີ້ນຳການແຂ່ງຂັນ-ຍ້ອງຍໍລະດັບຊາດມີໜ້າທີ່ຊີ້ນຳ ຕິດຕາມ,ກວດກາ,ຊຸກຍູ້ການຈັດຕັ້ງປະຕິບັດວຽກງານແຂ່ງຂັນ-ຍ້ອງຍໍໃນທົ່ວປະເທດ ແລະ ພິຈາລະນາການຍ້ອງຍໍຕາມພາລະບົດບາດຂອງຕົນ.

4. ສະຖາບັນແຂ່ງຂັນ-ຍ້ອງຍໍມີໜ້າທີ່ ແລະ ຄວາມຮັບຜິດຊອບດັ່ງນີ້ :

- ເປັນເສນາທິການຊ່ວຍຂັ້ນເທິງໃນການຄົ້ນຄ້ວາຮູບແບບ ຫລື ວັດຖຸຍ້ອງຍໍ, ນິຕິກຳຕ່າງໆກ່ຽວກັບວຽກງານແຂ່ງຂັນ-ຍ້ອງຍໍ;ຄົ້ນຄ້ວາອອກບົດແນະນຳການຈັດຕັ້ງປະຕິບັດວຽກງານແຂ່ງຂັນ-ຍ້ອງຍໍ; ຊ່ວຍຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານແຂ່ງຂັນ - ຍ້ອງຍໍໃນຂອບເຂດທົ່ວປະເທດ.

- ສະຫຼຸບຖອດຖອນບົດຮຽນ, ສະເໜີຮູບການຍ້ອງຍໍ ແລະ ສະເໜີປັບປຸງວຽກງານແຂ່ງຂັນ-ຍ້ອງຍໍໃນແຕ່ລະໄລຍະ.

5. ບັນດາອົງການສື່ມວນຊົນມີໜ້າທີ່ ແລະ ຄວາມຮັບຜິດຊອບໂຄສະນາ, ອອກຂ່າວກ່ຽວກັບບົດຮຽນທີ່ດີເດັ່ນຂອງຂະບວນການແຂ່ງຂັນ - ຍ້ອງຍໍ ແລະ ຕົວແບບວຽກດີຄົນເດັ່ນທີ່ເກີດຂຶ້ນໃນຂະບວນການຕ່າງໆແຕ່ລະໄລຍະ.

## ໝວດທີ II.

### ຮູບການ, ຂອບເຂດ, ຄຳຂວັນ,
### ຄາດໝາຍລວມ, ເນື້ອໃນ ແລະ ຂັ້ນຕອນການແຂ່ງຂັນ.

**ມາດຕາ 9. ຮູບການແຂ່ງຂັນ**

ຮູບການແຂ່ງຂັນມີສອງຮູບການຄື : ແຂ່ງຂັນປົກກະຕິ ແລະ ແຂ່ງຂັນຕາມແຕ່ລະບັ້ນ.

- ແຂ່ງຂັນປົກກະຕິ :ແມ່ນການແຂ່ງຂັນຕາມພາລະບົດບາດ,ໜ້າທີ່ຂອງແຕ່ລະຂົງເຂດວຽກງານໃນແຕ່ລະປີ.
- ແຂ່ງຂັນຕາມແຕ່ລະຂັ້ນ : ແມ່ນການແຂ່ງຂັນທີ່ໄດ້ກຳນົດໄລຍະເວລາລະອຽດ ຫຼື ແຂ່ງຂັນຕາມມະຕິຄຳສັ່ງຂອງຂັ້ນເທິງ.

**ມາດຕາ 10. ຂອບເຂດຂອງການແຂ່ງຂັນ**

1. ຈັດຕັ້ງການແຂ່ງຂັນໃນຂອບເຂດທົ່ວປະເທດ.
2. ຈັດຕັ້ງການແຂ່ງຂັນຢູ່ແຕ່ລະສຳນັກງານ, ອົງການ, ທຸກທ້ອງຖິ່ນ ແລະ ແຕ່ລະຫົວໜ່ວຍຮາກຖານ.

**ມາດຕາ 11. ຄຳຂວັນຂອງການແຂ່ງຂັນ**

ການແຂ່ງຂັນຕ້ອງດຳເນີນຢ່າງເປັນຂະບວນຟົດຟື້ນພາຍໃຕ້ຄຳຂວັນ: " **ຮັກຊາດ ແລະ ພັດທະນາ** " ຮັກຊາດຕ້ອງຕິດພັນກັບການຮັກລະບອບໃໝ່, ພັດທະນາແມ່ນເຮັດໃຫ້ມີການຫັນປ່ຽນຈາກອັນເກົ່າໄປສູ່ອັນໃໝ່ທີ່ຂະຫຍາຍຕົວກ້າວໜ້າຂຶ້ນເລື້ອຍໆ; ສູ້ຊົນປະຕິບັດ 2 ໜ້າທີ່ຍຸດທະສາດຄື :" **ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ** ", ລົບລ້າງຄວາມທຸກຍາກ, ຫັນເປັນອຸດສະຫະກຳ ແລະ ທັນສະໄໝເຮັດໃຫ້ປະເທດຊາດພົ້ນຈາກຄວາມດ້ອຍພັດທະນາປີ 2020.

**ມາດຕາ 12. ຄາດໝາຍລວມຂອງການແຂ່ງຂັນ**

ການຈັດຕັ້ງແຂ່ງຂັນຕ້ອງຕັ້ງໜ້າ,ສູ້ຊົນ,ບຸກບືນແຂ່ງຂັນພັດທະນາຕາມ 4 ຄາດໝາຍລວມຄື : **ໃຫ້ໄວ, ໃຫ້ດີ, ໃຫ້ຫຼາຍ ແລະ ໃຫ້ຖືກກົດໝາຍ.**

**ໃຫ້ໄວ:** ການແຂ່ງຂັນຕ້ອງສູ້ຊົນໃຫ້ສຳເລັດຕາມກຳນົດເວລາ ຫຼື ສຳເລັດກ່ອນກຳນົດເວລາທີ່ວາງໄວ້ ; ບໍ່ຊັກຊ້າ ແລະ ບໍ່ທ່ວງດຶງແກ່ຍາວ.

**ໃຫ້ດີ :** ການແຂ່ງຂັນຕ້ອງຮັບປະກັນໃຫ້ມີຜົນສຳເລັດດີ, ໜັກແໜ້ນ, ມີຄຸນນະພາບ, ໄດ້ມາດຕະຖານ, ສາມາດແກ້ງແຍ້ງ ແລະ ໄດ້ຮັບຄວາມນິຍົມຈາກສັງຄົມ.

**ໃຫ້ຫຼາຍ :** ການແຂ່ງຂັນຕ້ອງຮັບປະກັນໃຫ້ໄດ້ຕາມຄາດໝາຍ ຫຼື ລື່ນຄາດໝາຍທີ່ວາງໄວ້ ແລະ ມີການຂະຫຍາຍຕົວຫຼາຍຂຶ້ນເລື້ອຍໆ.

**ໃຫ້ຖືກກົດໝາຍ :** ທຸກການແຂ່ງຂັນຕ້ອງບົນພື້ນຖານລະບຽບກົດໝາຍທີ່ໄດ້ກຳນົດໄວ້, ບໍ່ຝືນ ແລະ ບໍ່ຂັດກັບລະບຽບກົດໝາຍ.

**ມາດຕາ13. ເນື້ອໃນລວມຂອງການແຂ່ງຂັນ**

1. ແຂ່ງຂັນປະຕິບັດແນວທາງໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບທີ່ພັກ - ລັດວາງອອກ ແຕ່ລະໄລຍະ, ປະຕິບັດບັນດາຄາດໝາຍການປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຂອງພັກ, ການມີສະຖຽນລະພາບທາງການເມືອງ, ມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ, ການມີສະຕິລະວັງຕົວ ແລະ ຕອບຕ້ານທຸກກົນອຸບາຍທຳລາຍມ້າງເພຂອງພວກບໍ່ຫວັງດີຕໍ່ລະບອບໃໝ່ກໍ່ຄືຕໍ່ປະເທດຊາດພວກເຮົາ ແລະ ບັນດາຄາດໝາຍກ່ຽວກັບການປັບປຸງກໍ່ສ້າງກຳລັງປະກອບອາວຸດ.
2. ແຂ່ງຂັນປະຕິບັດບັນດາຄາດໝາຍການພັດທະນາເສດຖະກິດທີ່ພັກ-ລັດວາງອອກແຕ່ລະດ້ານຄື : ດ້ານອຸດສະຫະກຳ ແລະ ຫັດຖະກຳ ; ດ້ານການບໍລິການ ແລະ ການພັດທະນາດ້ານກະ

ສິກຳເປັນຕົ້ນການຜະລິດເປັນສິນຄ້າໂດຍການປູກຝັງ, ການລ້ຽງສັດ, ການສ້າງເສດຖະກິດຮ່ວມມື ຂອງຊາວກະສິກອນ, ການຂະຫຍາຍ ແລະ ນຳໃຊ້ວິທະຍາສາດເຕັກນິກໃໝ່, ການຍົກສະມັດຕະພາບ ແລະ ຄຸນນະພາບຂອງການຜະລິດ; ການປະຢັດມັດທະຍັດ ແລະ ອື່ນໆ.

3. ແຂ່ງຂັນປະຕິບັດບັນດາຄາດໝາຍທາງດ້ານວັດທະນະທຳ - ສັງຄົມທີ່ພົກ - ລັດວາງອອກແຕ່ລະໄລຍະເຊັ່ນ: ການລົບລ້າງຄວາມທຸກຍາກ, ການຈັດສັນອາຊີບແບບຄົງທີ່, ແກ້ໄຂວຽກເຮັດງານທຳ, ບັນຫາສະຫວັດດີການສັງຄົມ ; ການລົບລ້າງຄວາມບໍ່ຮູ້ໜັງສື, ປະຕິບັດການສຶກສາຂັ້ນປະຖົມແບບບັງຄັບ ; ການປະຕິບັດບັນດາຄາດໝາຍດ້ານສາທາລະນະສຸກ ; ການປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ, ຂອງແຕ່ລະຊົນເຜົ່າ ; ການສ້າງສະຕິຊາດ, ສະຕິເຄົາລົບລະບຽບກົດໝາຍ ແລະ ຈັນຍາບັນດ້ານອື່ນໆ.

4. ຕັ້ງໜ້າແຂ່ງຂັນປະຕິບັດບັນດາຄາດໝາຍຂອງການກໍ່ສ້າງ ແລະ ປັບປຸງລະບົບການເມືອງທີ່ກຳນົດອອກແຕ່ລະໄລຍະໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ; ບັນຫາການປົກປັກຮັກສາ ແລະ ເສີມຂະຫຍາຍຄວາມສາມັກຄີພາຍໃນການຈັດຕັ້ງ, ຄວາມສາມັກຄີເປັນປຶກແຜ່ນຂອງປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ ; ການເສີມຂະຫຍາຍປະຊາທິປະໄຕ, ຄວາມສະເໝີພາບ, ຄວາມຍຸຕິທຳໃນສັງຄົມ ແລະ ອື່ນໆ.

### ມາດຕາ 14. ຂັ້ນຕອນຂອງການແຂ່ງຂັນ

1. ຕ້ອງກຳນົດຈຸດປະສົງ, ຄາດໝາຍ ແລະ ເນື້ອໃນລະອຽດຂອງການແຂ່ງຂັນໂດຍທັນເອົາບັນດາເນື້ອໃນທີ່ກຳນົດໄວ້ໃນມາດຕາ 11, ມາດຕາ12 ແລະ ມາດຕາ 13 ຂອງດຳລັດສະບັບນີ້ໃຫ້ເປັນອັນລະອຽດ, ແທດເໝາະກັບແຕ່ລະຂົງເຂດ ແລະ ແຕ່ລະບໍລິເວນ.

2. ກຳນົດຄຳຂັວນສະເພາະຂອງການແຂ່ງຂັນໃຫ້ແທດເໝາະກັບແຕ່ລະຂົງເຂດວຽກງານບົນພື້ນຖານຄຳຂັວນລວມ ແລະ ກຳນົດໄລຍະເວລາການແຂ່ງຂັນໃຫ້ຈະແຈ້ງ.

3. ກຳນົດເງື່ອນໄຂ ແລະ ມາດຕະຖານການແຂ່ງຂັນ.

4. ປຸກລະດົມ ແລະ ຊີ້ນຳການຈັດຕັ້ງປະຕິບັດຂະບວນການແຂ່ງຂັນ.

5. ສະຫຼຸບຖອດຖອນບົດຮຽນ ແລະ ຍ້ອງຍໍວຽກດີຄົນເດັ່ນຜ່ານຂະບວນການແຂ່ງຂັນ.

## ໝວດທີ III.
## ປະເພດການຍ້ອງຍໍ.

### ມາດຕາ 15. ຫຼຽນລະດັບສູງ

1. ຫຼຽນຄຳແຫ່ງຊາດ.
2. ຫຼຽນໂພໄຊລ້ານຊ້າງ.
3. ຫຼຽນກຽດຕິຄຸນ.

### ມາດຕາ 16. ຫຼຽນໄຊ

1. ຫຼຽນໄຊອິດສະຫຼະ ຊັ້ນ I, ຊັ້ນ II ແລະ ຊັ້ນ III
2. ຫຼຽນໄຊແຮງງານ ຊັ້ນ I, ຊັ້ນ II ແລະ ຊັ້ນ III

3. ຫຼຽນໄຊພັດທະນາ ຊັ້ນ I, ຊັ້ນ II ແລະ ຊັ້ນ III

4. ຫຼຽນໄຊຊະນະເລີດ ຊັ້ນ I, ຊັ້ນ II ແລະ ຊັ້ນ III

5. ຫຼຽນໄຊພິລາດອາດຫານ ຊັ້ນ I, ຊັ້ນ II ແລະ ຊັ້ນ III

6. ຫຼຽນໄຊມິດຕະພາບ.

**ມາດຕາ 17. ນາມມະຍົດ**

1. ຫຼຽນ ແລະ ນາມມະຍົດວິລະຊົນແຫ່ງຊາດ.
2. ຫຼຽນ ແລະ ນາມມະຍົດວິລະຊົນແຮງງານ.
3. ຫຼຽນ ແລະ ນາມມະຍົດນັກຮົບແຂ່ງຂັນແຫ່ງຊາດ
4. ຫຼຽນ ແລະ ນາມມະຍົດນັກຮົບແຂ່ງຂັນອອກແຮງງານດີເດັ່ນແຫ່ງຊາດ
5. ຫຼຽນ ແລະ ນາມມະຍົດສິລະປິນແຫ່ງຊາດ.
6. ຫຼຽນ ແລະ ນາມມະຍົດຄູແຫ່ງຊາດ.
7. ຫຼຽນ ແລະ ນາມມະຍົດສິລະປິນດີເດັ່ນ.
8. ຫຼຽນ ແລະ ນາມມະຍົດຄູປະຊາຊົນ
9. ຫຼຽນ ແລະ ນາມມະຍົດແພດແຫ່ງຊາດ
10. ຫຼຽນ ແລະ ນາມມະຍົດແພດປະຊາຊົນ
11. ຫຼຽນ ແລະ ນາມມະຍົດນັກຮົບແຂ່ງຂັນອອກແຮງງານດີເດັ່ນຂັ້ນກະຊວງ, ອົງການ, ນະຄອນ ແລະ ແຂວງ.
12. ຫຼຽນ ແລະ ນາມມະຍົດນັກຮົບແຂ່ງຂັນອອກແຮງງານດີເດັ່ນຂັ້ນເມືອງ ແລະ ສະຖາບັນຕ່າງໆ.

**ມາດຕາ 18. ທຸງໄຊ**

1. ທຸງໄຊແຂ່ງຂັນຂັ້ນລັດຖະບານ.
2. ທຸງໄຊແຂ່ງຂັນຂັ້ນກະຊວງ, ອົງການ, ນະຄອນ ແລະ ແຂວງ.

**ມາດຕາ 19. ຫຼຽນກາ**

1. ຫຼຽນກາພັດທະນາ.
2. ຫຼຽນກາແຮງງານ
3. ຫຼຽນກາມິດຕະພາບ
4. ຫຼຽນກາລະນຶກ

**ມາດຕາ 20. ໃບຈາລຶກບຸນຄຸນ ແລະ ໃບຍ້ອງຍໍສັນລະເສີນ**

1. ໃບປະເທດຊາດຈາລຶກບຸນຄຸນ
2. ໃບຍ້ອງຍໍລັດຖະບານ
3. ໃບຍ້ອງຍໍ ແລະ ກາລະນຶກຂອງກະຊວງ, ອົງການທຽບເທົ່າກະຊວງ; ນະຄອນ, ແຂວງ, ເມືອງ ແລະ ສະຖາບັນຕ່າງໆ.
4. ໃບຊົມເຊີຍ ຫຼື ໃບສັນລະເສີນຕ່າງໆ.

## ໝວດທີ IV .

## ຄຸນຄ່າຂອງຫຼຽນປະເພດຕ່າງໆ:

### ມາດຕາ 21. ຫຼຽນຄຳແຫ່ງຊາດ

ຫຼຽນຄຳແຫ່ງຊາດເປັນຫຼຽນສູງສຸດຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອປະດັບ ຫລື ມອບໃຫ້ບຸກຄົນການນຳຂັ້ນສູງລະດັບຊາດ, ມອບໃຫ້ລວມໝູ່ການຈັດຕັ້ງນັບທັງຢູ່ພາຍໃນ ແລະ ຕ່າງປະເທດທີ່ມີຜົນງານໃຫຍ່ຫຼວງ, ມີຄຸນງາມຄວາມດີ, ມີຜົນງານໂດດເດັ່ນຕໍ່ພາລະກິດປະຕິວັດຕໍ່ສູ້ປົດປ່ອຍຊາດ, ການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

1. **ກ່ຽວກັບບຸກຄົນ:** ຜູ້ທີ່ຈະໄດ້ຮັບການຍ້ອງຍໍດ້ວຍຫຼຽນຄຳແຫ່ງຊາດແມ່ນຜູ້ທີ່ມີເງື່ອນໄຂ, ມາດຖານດັ່ງລຸ່ມນີ້:

-ໄດ້ດຳລົງຕຳແໜ່ງໃດໜຶ່ງໃນການນຳຂັ້ນສູງລະດັບຊາດເຊັ່ນ: ປະທານພັກ ຫລື ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ; ກຳມະການກົມການເມືອງສູນກາງພັກ; ປະທານປະເທດ; ປະທານສະພາແຫ່ງຊາດ; ນາຍົກລັດຖະມົນຕີ; ປະທານສູນກາງແນວລາວສ້າງຊາດ; ຮອງປະທານປະເທດ, ຮອງປະທານສະພາແຫ່ງຊາດ ແລະ ຮອງນາຍົກລັດຖະມົນຕີ.

- ໄດ້ເຂົ້າຮ່ວມເຄື່ອນໄຫວປະຕິວັດລຽນຕິດແຕ່ 50 ປີຂຶ້ນໄປ (ນັບແຕ່ປີເຂົ້າການປະຕິວັດເປັນຕົ້ນມາ), ບໍ່ມີຂໍ້ຂາດຕົກບົກຜ່ອງໃຫຍ່ຫລວງ.

- ເປັນຜູ້ທີ່ມີຜົນງານໃຫຍ່ຫຼວງ, ດີເດັ່ນພິເສດ, ມີຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍແຕ່ລະໄລຍະ, ໄດ້ອຸທິດເຫື່ອແຮງສະຕິປັນຍາຂອງຕົນເຂົ້າໃນການນຳພາລວມຂອງໝູ່ຄະນະຕະຫຼອດມາ.

- ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດດີ, ມີແບບແຜນດຳລົງຊີວິດຜ່ອງໃສ, ມີບົດບາດອິດທິພົນສູງ,ໄດ້ຮັບຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈຈາກມະຫາຊົນຢ່າງກວ້າງຂວາງ.

- **ສຳລັບຜູ້ນຳຂອງຕ່າງປະເທດ:** ແມ່ນຜູ້ທີ່ມີຜົນງານໃຫຍ່ຫລວງ,ມີຄຸນງາມຄວາມດີໃນການປະກອບສ່ວນເສີມສ້າງ, ປົກປັກຮັກສາສາຍພົວພັນມິດຕະພາບທີ່ດີຕໍ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຊຶ່ງພັກ-ລັດ ແລະ ປະຊາຊົນລາວຮັບຮອງ ແລະ ເຄົາລົບນັບຖື.

2. **ລວມໝູ່ການຈັດຕັ້ງທີ່ຈະໄດ້ຮັບຫຼຽນຄຳແຫ່ງຊາດ:** ແມ່ນລວມໝູ່ການຈັດຕັ້ງທີ່ມີເງື່ອນໄຂ-ມາດຖານດັ່ງລຸ່ມນີ້:

- ໄດ້ຮັບການສ້າງຕັ້ງຂຶ້ນເປັນທາງການ ແລະ ຕັ້ງໜ້າເຄື່ອນໄຫວຕາມພາລະບົດບາດຂອງຕົນ, ມີຜົນສຳເລັດຕະຫລອດມາເປັນເວລາແຕ່ 50 ປີຂຶ້ນໄປນັບແຕ່ມື້ສ້າງຕັ້ງເປັນຕົ້ນມາ.

- ພາຍໃນມີຄວາມສາມັກຄີດີ, ການຈັດຕັ້ງພັກ ແລະ ບັນດາອົງການຈັດຕັ້ງມະຫາຊົນມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ.

- ສ້າງໄດ້ຜົນງານດີເດັ່ນລຽນຕິດ,ເຄີຍໄດ້ຮັບໃບຍ້ອງຍໍລັດຖະບານ, ຫຼຽນກາ, ຫຼຽນໄຊປະເພດຕ່າງໆ ແລະ ທຸງໄຊແຕ່ລະໄລຍະ.

- ໄດ້ຮັບຫຼຽນໄຊອິດສະຫຼະຊັ້ນ I ມາກ່ອນ.

- ກໍລະນີຈະໄດ້ຮັບຫຼຽນຄຳແຫ່ງຊາດເທື່ອທີ່ສອງ ຫລື ທີ່ສາມຕ້ອງມີຜົນງານດີເດັ່ນພິເສດ

ແລະ ມີໄລຍະເວລາຢ່າງໜ້ອຍ 15 ປີຂຶ້ນໄປນັບແຕ່ມື້ໄດ້ຮັບຫຼຽນຄໍາແຫ່ງຊາດເທື່ອທໍາອິດ ຫລື ເທື່ອ ທີ່ສອງເປັນຕົ້ນມາ.

- **ສໍາລັບລວມໝູ່ຂອງຕ່າງປະເທດ:** ຕ້ອງແມ່ນລວມໝູ່ການຈັດຕັ້ງທີ່ໄດ້ປະກອບສ່ວນໃນການພົວພັນຮ່ວມມືດ້ານຕ່າງໆ, ມີຜົນງານໃຫຍ່ຫລວງ, ດີເດັ່ນພິເສດຕໍ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຊຶ່ງພັກ, ລັດ ແລະ ປະຊາຊົນລາວໄດ້ຮັບຮູ້.

**ມາດຕາ 22. ຫຼຽນໄພໄຊລ້ານຊ້າງ**

ຫຼຽນໄພໄຊລ້ານຊ້າງເປັນຫຼຽນຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ມີຄຸນຄ່າສະເພາະເພື່ອມອບ ຫລື ປະດັບໃຫ້ພະມະຫາກະສັດ, ປະມຸກລັດຂອງຕ່າງປະເທດຜູ້ທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນປະກອບສ່ວນເຂົ້າໃນການເສີມສ້າງ, ປົກປັກຮັກສາສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີງາມກັບສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 23. ຫຼຽນກຽດຕິຄຸນ**

ຫຼຽນກຽດຕິຄຸນເປັນຫຼຽນຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ມີຄຸນຄ່າສໍາລັບມອບ ຫລື ປະດັບໃຫ້ພະບໍຣົມວົງສານຸວົງ, ພະມະຫາກະສັດ, ປະມຸກລັດ, ນາຍົກລັດຖະມົນຕີຂອງຕ່າງປະເທດທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສານຕໍ່ສາຍພົວພັນມິດຕະພາບ, ການຮ່ວມມືອັນດີງາມກັບສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 24. ຫຼຽນໄຊອິດສະຫຼະ**

ຫຼຽນໄຊອິດສະຫຼະເປັນຫຼຽນຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອປະດັບ ຫລື ມອບໃຫ້ບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນ, ມີຄຸນງາມຄວາມດີປະກອບສ່ວນໃຫ້ແກ່ພາລະກິດຕໍ່ສູ້ປົດປ່ອຍຊາດ, ການປົກປັກຮັກສາ ແລະ ພັດທະນາປະເທດຊາດ. ຫຼຽນໄຊອິດສະຫຼະລວມ ມີຊັ້ນ I, ຊັ້ນ II ແລະ ຊັ້ນ III.

**1.ກ່ຽວກັບບຸກຄົນ:**

ຜູ້ທີ່ຈະໄດ້ຮັບການຍ້ອງຍໍດ້ວຍຫຼຽນໄຊອິດສະຫຼະປະເພດຕ່າງໆຕ້ອງແມ່ນຜູ້ທີ່ມີເງື່ອນໄຂ - ມາດ ຖານດັ່ງລຸ່ມນີ້:

- ມີຜົນງານຫຼາຍ ແລະ ດີເດັ່ນຮອບດ້ານ, ມີຄຸນງາມຄວາມດີໃນການປະກອບສ່ວນໃຫ້ແກ່ພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະ ພັດທະນາປະເທດຊາດ, ເປັນບຸກຄົນສໍາຄັນທີ່ໄດ້ດໍາລົງຕໍາແໜ່ງນໍາພາ- ຄຸ້ມຄອງລະດັບສໍາຄັນຂັ້ນຕ່າງໆ.

- ບຸກຄົນທີ່ຈະໄດ້ຮັບຫຼຽນໄຊອິດສະຫຼະຊັ້ນ I ແມ່ນຜູ້ທີ່ໄດ້ເຄື່ອນໄຫວເຮັດການປະຕິວັດລຽນຕິດແຕ່ 25 ປີຂຶ້ນໄປ, ນັບແຕ່ມື້ໄດ້ຮັບການແຕ່ງຕັ້ງມອບໝາຍໜ້າທີ່ເປັນທາງການເປັນຕົ້ນໄປ, ມີຜົນງານຫຼວງຫຼາຍ ແລະ ດີເດັ່ນພິເສດ, ບໍ່ເຄີຍມີຂໍ້ບົກຜ່ອງ, ເຄີຍໄດ້ຮັບໃບຍ້ອງຍໍລັດຖະບານ, ໄດ້ຮັບຫຼຽນກາ, ຫຼຽນໄຊປະເພດຕ່າງໆແຕ່ລະໄລຍະ ແລະ ເຄີຍໄດ້ຮັບຫຼຽນໄຊອິດສະຫຼະຊັ້ນ II ມາກ່ອນ.

- ບຸກຄົນທີ່ຈະໄດ້ຮັບຫຼຽນໄຊອິດສະຫຼະຊັ້ນ II ແມ່ນຜູ້ທີ່ໄດ້ເຄື່ອນໄຫວເຮັດການປະຕິວັດລຽນຕິດແຕ່ 20 ປີຂຶ້ນໄປ,ນັບແຕ່ມື້ໄດ້ຮັບການແຕ່ງຕັ້ງມອບໝາຍໜ້າທີ່ເປັນທາງການເປັນຕົ້ນໄປ, ມີຜົນງານຫຼວງຫລາຍ, ດີເດັ່ນພິເສດ, ບໍ່ເຄີຍມີຂໍ້ບົກຜ່ອງເຖິງຂັ້ນລົງວິໄນ; ເຄີຍໄດ້ຮັບໃບຍ້ອງຍໍລັດ

ຖະບານ, ໄດ້ຮັບຫຼຽນກາ, ຫຼຽນໄຊປະເພດຕ່າງໆ ແລະ ເຄີຍໄດ້ຮັບຫຼຽນໄຊອິດສະຫຼະຊັ້ນ III ມາກ່ອນ.

- ບຸກຄົນທີ່ຈະໄດ້ຮັບຫຼຽນໄຊອິດສະຫຼະຊັ້ນ III ແມ່ນຜູ້ທີ່ໄດ້ເຄື່ອນໄຫວເຮັດການປະຕິວັດລຽນຕິດແຕ່ 15 ປີຂຶ້ນໄປ, ນັບແຕ່ມື້ໄດ້ຮັບການແຕ່ງຕັ້ງມອບໝາຍໜ້າທີ່ເປັນທາງການເປັນຕົ້ນໄປ, ມີຜົນງານດີເດັ່ນຕະຫຼອດມາ,ບໍ່ເຄີຍມີຂໍ້ບົກຜ່ອງເຖິງຂັ້ນລົງວິໄນ, ເຄີຍໄດ້ຮັບໃບຍ້ອງຍໍລັດຖະບານ, ໄດ້ຮັບຫຼຽນກາ ແລະ ຫຼຽນໄຊປະເພດຕ່າງໆ.

• **ສຳລັບຄົນຕ່າງປະເທດ:** ຜູ້ທີ່ຈະໄດ້ຮັບຫຼຽນໄຊອິດສະຫຼະຊັ້ນໃດໜຶ່ງນັ້ນ, ຕ້ອງແມ່ນຜູ້ທີ່ມີຜົນງານໃຫຍ່ຫຼວງ, ມີຄຸນງາມຄວາມດີໃນການປະກອບສ່ວນສ້າງ ແລະ ປົກປັກຮັກສາສາຍພົວພັນມິດຕະພາບ, ການຮ່ວມມືທີ່ດີຕໍ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມີຜົນງານຄຸນງາມຄວາມດີຊຶ່ງພັກ - ລັດ ແລະ ປະຊາຊົນລາວໄດ້ຮັບຮູ້ໂດຍຈັດຕາມລະດັບຜົນງານຕົວຈິງທີ່ໄດ້ປະກອບສ່ວນ ແລະ ຈັດລະດັບຮູບການຍ້ອງຍໍແຕ່ຫຼຽນໄຊອິດສະຫຼະຊັ້ນ I, ຊັ້ນ II ແລະ ຊັ້ນ III ໃຫ້ເໝາະສົມ.

**2.ກ່ຽວກັບການຈັດຕັ້ງລວມໝູ່:** ການຈັດຕັ້ງໃດທີ່ຈະໄດ້ຮັບການຍ້ອງຍໍດ້ວຍຫຼຽນໄຊອິດສະຫຼະຊັ້ນ I, ຊັ້ນ II ແລະ ຊັ້ນ III ຕ້ອງມີເງື່ອນໄຂ-ມາດຖານດັ່ງລຸ່ມນີ້:

- ໄດ້ຮັບການສ້າງຕັ້ງຂຶ້ນເປັນທາງການ ແລະ ໄດ້ເຄື່ອນໄຫວປະຕິບັດພາລະບົດບາດຂອງຕົນມີຜົນສຳເລັດດີຢ່າງຕໍ່ເນື່ອງລຽນຕິດແຕ່ 30 ປີຂຶ້ນໄປ (ສຳລັບຊັ້ນ I), ແຕ່ 25 ປີ ຂຶ້ນໄປ (ສຳລັບຊັ້ນ II) ແລະ ແຕ່ 20 ປີຂຶ້ນໄປ (ສຳລັບຊັ້ນ III) ນັບແຕ່ມື້ສ້າງຕັ້ງເປັນຕົ້ນມາ.

- ພາຍໃນມີຄວາມສາມັກຄີດີ, ການຈັດຕັ້ງພັກ ແລະ ບັນດາອົງການຈັດຕັ້ງມະຫາຊົນມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ.

- ສ້າງໄດ້ຜົນງານດີເດັ່ນຕໍ່ເນື່ອງແຕ່ລະໄລຍະ, ເຄີຍໄດ້ຮັບໃບຍ້ອງຍໍລັດຖະບານ,ໄດ້ຮັບຫຼຽນກາ, ຫຼຽນໄຊປະເພດຕ່າງໆມາກ່ອນລວມທັງຫຼຽນໄຊອິດສະຫຼະຊັ້ນ II, ຊັ້ນ III ຕາມລຳດັບ.

- ກໍລະນີຈະໄດ້ຮັບຫຼຽນໄຊອິດສະຫຼະອີກຄັ້ງໃໝ່ໃນຊັ້ນດຽວກັນທີ່ເຄີຍໄດ້ຮັບມາກ່ອນ ຫລືຈະໄດ້ຮັບຊັ້ນໃໝ່ສູງກວ່າເກົ່ານັ້ນຕ້ອງມີຜົນງານດີເດັ່ນຕໍ່ເນື່ອງລຽນຕິດ ແລະ ມີໄລຍະເວລາຢ່າງໜ້ອຍແຕ່ 15 ປີຂຶ້ນໄປນັບແຕ່ມື້ໄດ້ຮັບຄັ້ງກ່ອນເປັນຕົ້ນມາ.

• **ສຳລັບຕໍ່ຕ່າງປະເທດ:** ລວມໝູ່ການຈັດຕັ້ງຂອງຕ່າງປະເທດທີ່ຈະໄດ້ຮັບການຍ້ອງຍໍດ້ວຍຫຼຽນໄຊອິດສະຫຼະຊັ້ນໃດໜຶ່ງນັ້ນຕ້ອງແມ່ນອົງການຈັດຕັ້ງທີ່ໄດ້ມີການປະກອບສ່ວນໃນການພົວພັນຮ່ວມມືດ້ານຕ່າງໆກັບສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມີຜົນງານໃຫຍ່ຫຼວງ, ດີເດັ່ນ ຊຶ່ງ ພັກ - ລັດ ແລະ ການຈັດຕັ້ງຕ່າງໆຂອງລາວໄດ້ຮັບຮູ້ໂດຍຈັດລະດັບການຍ້ອງຍໍ (ຊັ້ນ I, ຊັ້ນ II ແລະ ຊັ້ນ III ) ໃຫ້ເໝາະສົມຕາມລະດັບຜົນງານ ແລະ ໄລຍະເວລາຂອງການປະກອບສ່ວນຂອງແຕ່ລະການຈັດຕັ້ງ.

**ມາດຕາ 25. ຫຼຽນໄຊແຮງງານ**

ຫຼຽນໄຊແຮງງານເປັນຫຼຽນທີ່ມີຄຸນຄ່າຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອຍ້ອງຍໍບຸກຄົນ ແລະ ການຈັດຕັ້ງທີ່ໄດ້ມີຜົນງານດີເດັ່ນໃນການອອກແຮງງານທາງກາຍ ແລະ ມັນສະໝອງ, ການຄົ້ນຄວ້າ, ການຂຶດຊຽນ, ຜະລິດອອກສິ່ງທີ່ມີປະໂຫຍດໃຫ້ສັງຄົມ, ປະ

ກອບສ່ວນເຂົ້າໃນ ການປົກປັກຮັກສາ ແລະ ພັດທະນາປະເທດຊາດ; ຫຼຽນໄຊແຮງງານລວມມີຊັ້ນ I, ຊັ້ນ II ແລະ ຊັ້ນ III.

**1. ຫຼຽນໄຊແຮງງານຊັ້ນ I**

ຫຼຽນໄຊແຮງງານຊັ້ນ I ແມ່ນເພື່ອມອບ ຫລື ປະດັບໃຫ້ແກ່ບຸກຄົນ ແລະ ການຈັດຕັ້ງໃດໜຶ່ງທີ່ມີ ເງື່ອນໄຂ-ມາດຖານດັ່ງນີ້:

**1.1. ສຳລັບບຸກຄົນ**

- ມີຜົນງານຫລາຍ-ດີເດັ່ນໃນການອອກແຮງງານ, ມີຫົວຄິດປະດິດສ້າງ, ມີຄວາມຊື່ສັດ, ທ່ຽງທຳ, ອອກແຮງງານຖືກຕ້ອງຕາມລະບຽບກົດໝາຍ ແລະ ກະທຳສິ່ງທີ່ມີປະໂຫຍດໃຫ້ສັງຄົມ, ໄດ້ປະກອບສ່ວນໃຫ້ແກ່ການປົກປັກຮັກສາ ແລະ ພັດທະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

- ໄດ້ຮັບໃບຍ້ອງຍໍລັດຖະບານ, ຫຼຽນກາແຮງງານ ແລະ ຫຼຽນໄຊແຮງງານຊັ້ນ II,ຊັ້ນ III ມາກ່ອນ ຫຼື ໄດ້ຮັບນາມມະຍົດເປັນນັກຮົບແຂ່ງຂັນອອກແຮງງານດີເດັ່ນທົ່ວປະເທດ.

- ຄົ້ນຄວ້າໄດ້ລິຂະສິດໃໝ່ໃດໜຶ່ງ, ມີຫົວຄິດປະດິດສ້າງໃນການດັດແປງ, ການນຳໃຊ້ເຕັກນິກວິທະຍາສາດເພື່ອຮັບໃຊ້ສັງຄົມ, ສາມາດສ້າງໄດ້ຜະລິດຕະພັນທີ່ມີປະລິມານ ແລະ ຄຸນນະພາບສູງໃຫ້ການຈັດຕັ້ງ ແລະ ສັງຄົມ; ມີການເຄື່ອນໄຫວວຽກງານດີເດັ່ນລຽນຕິດແຕ່ 10 ປີ ຂຶ້ນໄປ ( ເວັ້ນເສຍກໍລະນີມີຜົນງານດີເດັ່ນພິເສດ-ບັງເອີນ).

**1.2. ສຳລັບການຈັດຕັ້ງ**

- ການຈັດຕັ້ງລວມໝູ່ທີ່ຈະໄດ້ຮັບຫຼຽນໄຊແຮງງານຊັ້ນ I ແມ່ນການຈັດຕັ້ງທີ່ໄດ້ຮັບການສ້າງຕັ້ງຂຶ້ນຖືກຕ້ອງຕາມລະບຽບ-ກົດໝາຍ, ເຄື່ອນໄຫວມີຜົນງານດີເດັ່ນໃນການປະຕິບັດໜ້າທີ່ຕາມພາລະບົດບາດຂອງຕົນ, ດີເດັ່ນໃນການອອກແຮງງານ, ມີຫົວຄິດປະດິດສ້າງໃນການຄົ້ນຄ້ວາ, ການຂີດຂຽນ, ສ້າງໄດ້ຜະລິດຕະພັນມີຄຸນນະພາບດີໃຫ້ສັງຄົມ; ດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ; ມີຂະບວນວິວັດເຄື່ອນໄຫວວຽກງານດີເດັ່ນລຽນຕິດແຕ່ 15 ປີ ຂຶ້ນໄປ ( ເວັ້ນເສຍມີຜົນງານດີເດັ່ນພິເສດ- ບັງເອີນ ).

- ເຄີຍໄດ້ຮັບຫຼຽນໄຊແຮງງານຊັ້ນ II, ຊັ້ນ III ມາກ່ອນ ຫຼື ໄດ້ຮັບທຸງໄຊແຂ່ງຂັນຂັ້ນກະຊວງ-ອົງການ, ແຂວງ, ນະຄອນ ລຽນຕິດ 3 ຄັ້ງ ຫຼື ທຸງໄຊແຂ່ງຂັນຂັ້ນລັດຖະບານ.

- ມີການປະກອບສ່ວນແກ່ການພັດທະນາ, ຊ່ວຍເຫຼືອສັງຄົມດີ; ພາຍໃນມີຄວາມສາມັກຄີດີ, ການຈັດຕັ້ງຕ່າງໆຢູ່ພາຍໃນມີການເຄື່ອນໄຫວດີເດັ່ນ, ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ.

**2. ຫຼຽນໄຊແຮງງານຊັ້ນ II**

ຫຼຽນໄຊແຮງງານຊັ້ນ II ແມ່ນເພື່ອມອບ ຫລື ປະດັບໃຫ້ແກ່ບຸກຄົນ ແລະ ການຈັດຕັ້ງໃດໜຶ່ງທີ່ມີ ເງື່ອນໄຂ-ມາດຖານດັ່ງນີ້:

**2.1. ສຳລັບບຸກຄົນ:**

- ເປັນຜູ້ທີ່ມີຜົນງານດີເດັ່ນໃນຂະບວນວິວັດແຫ່ງການອອກແຮງງານດ້ວຍເຫື່ອແຮງ ແລະ ມັນສະໝອງ, ມີຜົນສຳເລັດດີເດັ່ນໃນການຄົ້ນຄ້ວາວິທະຍາສາດ ແລະ ການນຳໃຊ້ເຕັກນິກວິທະຍາສາດເພື່ອຮັບໃຊ້ສັງຄົມ, ມີຜົນງານດີເດັ່ນໃນການປະຕິບັດໜ້າທີ່ວຽກງານ, ການຄົ້ນຄ້ວາຂີດຂຽນ, ການອອກແຮງງານປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ, ມີການ

ເຄື່ອນໄຫວວຽກງານດີເດັ່ນລຽນຕິດຢ່າງໜ້ອຍ7 ປີຂຶ້ນໄປ(ເວັ້ນເສຍມີຜົນງານດີເດັ່ນພິເສດ-ບັງເອີນ)

- ມີຜົນສຳເລັດໃນການຄົ້ນຄວ້າບັນຫາໃດໜຶ່ງ, ມີຫົວຄິດປະດິດສ້າງສາມາດດັດແປງ, ນຳໃຊ້ເຕັກນິກວິທະຍາສາດເພື່ອຮັບໃຊ້ສັງຄົມ.

- ເຄີຍໄດ້ຮັບໃບຍ້ອງຍໍລັດຖະບານ, ໄດ້ຮັບຫຼຽນກາແຮງງານ, ຫຼຽນໄຊແຮງງານຊັ້ນ III ມາກ່ອນ ແລະ ໄດ້ຮັບນາມມະຍົດເປັນນັກຮົບແຂ່ງຂັນອອກແຮງງານດີເດັ່ນຂັ້ນກະຊວງ - ອົງການ, ແຂວງ - ນະຄອນ ແຕ່ໜຶ່ງຫາສອງເທື່ອລຽນຕິດ.

**2.2. ສຳລັບການຈັດຕັ້ງ:**

- ສ້າງໄດ້ຜົນງານດີເດັ່ນໃນການປະຕິບັດພາລະໜ້າທີ່ຂອງຕົນ; ດີເດັ່ນໃນການອອກແຮງງານສ້າງໄດ້ຜະລິດຕະພັນດີ, ມີຄຸນນະພາບຮັບໃຊ້ສັງຄົມ, ດຳເນີນທຸລະກິດຖືກຕ້ອງຕາມລະບຽບກົດໝາຍ ແລະ ມີຂະບວນວິວັດເຄື່ອນໄຫວວຽກງານດີເດັ່ນແຕ່ 10 ປີຂຶ້ນໄປນັບແຕ່ມື້ສ້າງຕັ້ງເປັນຕົ້ນມາ (ເວັ້ນເສຍມີ ຜົນງານດີເດັ່ນພິເສດ-ບັງເອີນ).

- ໄດ້ຮັບໃບຍ້ອງຍໍລັດຖະບານ, ໄດ້ຮັບຫລຽນກາແຮງງານ ແລະ ໄດ້ຮັບຫຼຽນໄຊແຮງງານຊັ້ນ III ມາກ່ອນ,ໄດ້ຮັບນາມມະຍົດເປັນກົມກອງອອກແຮງງານດີເດັ່ນ ແລະ ໄດ້ຮັບທຸງໄຊແຂ່ງຂັນຂັ້ນກະຊວງ,ອົງການ, ແຂວງ, ນະຄອນ ແຕ່ໜຶ່ງຫາສອງເທື່ອລຽນຕິດ.

- ພາຍໃນມີຄວາມສາມັກຄີດີ, ການຈັດຕັ້ງຕ່າງໆພາຍໃນກົມກອງເຂັ້ມແຂງມີການເຄື່ອນໄຫວດີເດັ່ນ, ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ.

**3. ຫຼຽນໄຊແຮງງານຊັ້ນ III:**

ຫຼຽນໄຊແຮງງານຊັ້ນ III ແມ່ນເພື່ອມອບ ຫລື ປະດັບໃຫ້ແກ່ບຸກຄົນ ແລະ ການຈັດຕັ້ງໃດໜຶ່ງທີ່ມີເງື່ອນໄຂ-ມາດຖານດັ່ງນີ້:

**3.1. ສຳລັບບຸກຄົນ :**

- ມີຜົນງານດີເດັ່ນໃນການປະຕິບັດໜ້າທີ່, ມີຜົນສຳເລັດໃນການຄົ້ນຄ້ວາວິທະຍາສາດ ແລະ ການນຳໃຊ້ເຕັກນິກວິທະຍາສາດ, ມີຜົນງານດີເດັ່ນໃນການປະຕິບັດໜ້າທີ່ວຽກງານ, ມີຄວາມດຸໝັ່ນອອກແຮງງານ, ສ້າງສິ່ງທີ່ມີປະໂຫຍດໃຫ້ລວມໝູ່ ແລະ ສັງຄົມ; ມີໄລຍະເວລາປະຕິບັດໜ້າທີ່ຢ່າງໜ້ອຍແຕ່ 5 ປີຂຶ້ນໄປນັບແຕ່ມື້ໄດ້ຮັບການແຕ່ງຕັ້ງມອບໝາຍໜ້າທີ່ (ເວັ້ນເສຍກໍລະນີພິເສດ)

- ໄດ້ຮັບນາມມະຍົດເປັນນັກຮົບແຂ່ງຂັນອອກແຮງງານດີເດັ່ນຂັ້ນຮາກຖານລຽນຕິດແຕ່ 2 ຫາ 3 ເທື່ອຂຶ້ນໄປ, ໄດ້ຮັບໃບຍ້ອງຍໍຂອງລັດຖະບານມາແລ້ວໜຶ່ງ ຫລື ສອງເທື່ອຂຶ້ນໄປ ແລະ ໄດ້ຮັບຫລຽນກາແຮງງານມາກ່ອນ.

**3.2. ສຳລັບການຈັດຕັ້ງ:**

- ສ້າງໄດ້ຜົນງານດີເດັ່ນລຽນຕິດໃນການປະຕິບັດພາລະບົດບາດ, ໜ້າທີ່ຂອງກົມກອງ;ດຳເນີນທລະກິດຖືກຕ້ອງຕາມກົດໝາຍ, ມີຜົນສຳເລັດດີ ແລະ ມີການປະກອບສ່ວນໃຫ້ແກ່ການພັດທະນາສ້າງສາປະເທດຊາດ.

- ໄດ້ຮັບນາມມະຍົດເປັນກົມກອງອອກແຮງງານດີເດັ່ນຂັ້ນກະຊວງ, ອົງການ, ແຂວງ, ນະຄອນ ແຕ່ 2 ເທື່ອລຽນຕິດຂຶ້ນໄປ ຫຼື ໄດ້ຮັບທຸງໄຊແຂ່ງຂັນຂັ້ນກະຊວງ, ອົງການ, ແຂວງ, ນະຄອນໜຶ່ງເທື່ອຂຶ້ນໄປ.

- ມີໄລຍະເວລາເຄື່ອນໄຫວດີເດັ່ນລຽນຕິດຢ່າງໜ້ອຍ 7 ປີຂຶ້ນໄປນັບແຕ່ມື້ສ້າງຕັ້ງເປັນຕົ້ນມາ (ເວັ້ນເສຍກໍລະນີພິເສດ); ການຈັດຕັ້ງພາຍໃນມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ.

◆ **ສໍາລັບບຸກຄົນ ແລະ ການຈັດຕັ້ງຂອງຕ່າງປະເທດ** ທີ່ຈະໄດ້ຮັບການຍ້ອງຍໍດ້ວຍຫຼຽນໄຊແຮງງານຊັ້ນໃດໜຶ່ງຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ນັ້ນແມ່ນ:

- ບຸກຄົນ ຫລື ການຈັດຕັ້ງທີ່ມີຜົນງານດີເດັ່ນປະກອບສ່ວນໃຫ້ແກ່ພາລະກິດແຫ່ງການພັດທະນາເສດຖະກິດ-ສັງຄົມຂອງລາວ, ຊຶ່ງບັນດາກະຊວງ - ອົງການ, ທ້ອງຖິ່ນເປັນຜູ້ສະເໜີ ແລະ ໄດ້ຮັບການເຫັນດີຈາກຂັ້ນເທິງ.

- ຮູບການ ແລະ ລະດັບຂອງການຍ້ອງຍໍຈະແມ່ນຫຼຽນໄຊແຮງງານຊັ້ນ I, ຊັ້ນ II ຫລື ຊັ້ນ III ນັ້ນຈະຈັດຕາມລະດັບ ແລະ ໄລຍະເວລາຂອງການປະກອບສ່ວນຕົວຈິງ.

**ມາດຕາ 26. ຫຼຽນໄຊພັດທະນາ**

ຫຼຽນໄຊພັດທະນາເປັນຫຼຽນຂອງສາທາລະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອປະດັບ ຫລື ມອບໃຫ້ບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນ, ມີຄຸນງາມຄວາມດີປະກອບສ່ວນຊ່ວຍເຫຼືອ ລ້າທາງດ້ານທຶນຮອນ, ວັດຖຸ, ເງິນຄໍາໃຫ້ແກ່ການພັດທະນາ ສາທາລະນະລັດ ປະຊາທິປະໄຕ ປະຊາ ຊົນລາວ; ຫຼຽນໄຊພັດທະນາລວມມີ ຊັ້ນ I, ຊັ້ນ II ແລະ ຊັ້ນ III;

ບຸກຄົນ ແລະ ການຈັດຕັ້ງນັບທັງພາຍໃນ ແລະ ຕ່າງປະເທດທີ່ມີຄວາມຈິງໃຈປະກອບສ່ວນຊ່ວຍເຫຼືອລ້າທາງດ້ານເງິນ, ຄໍາ ຫຼື ວັດຖຸທີ່ມີຄຸນຄ່າສູງໂດຍບໍ່ມີເງື່ອນໄຂ ແລະ ບໍ່ຮຽກຮ້ອງຄ່າຕອບແທນ, ຈະໄດ້ຮັບການຍ້ອງຍໍຈາກລັດຖະບານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ດ້ວຍ ຫຼຽນໄຊພັດທະນາຊັ້ນຕ່າງໆຢ່າງເໝາະສົມຕາມລະດັບ ຫຼື ຈໍານວນມູນຄ່າຂອງການປະກອບສ່ວນໃຫ້ແກ່ການພັດທະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 27. ຫຼຽນໄຊຊະນະເລີດ**

ຫຼຽນໄຊຊະນະເລີດແມ່ນເພື່ອມອບ ຫລື ປະດັບໃຫ້ບຸກຄົນທີ່ມີຄວາມອົດທົນໜຽວແໜ້ນ, ບຸກບືນເຮັດສໍາເລັດໜ້າທີ່, ມີຜົນງານດີເດັ່ນ, ປະກອບສ່ວນເຫື່ອແຮງໃຫ້ແກ່ພາລະກິດປະຕິວັດແຫ່ງການຕໍ່ສູ້ກູ້ຊາດຕ້ານຈັກກະພັດຜູ້ຮຸກຮານ ແລະ ພາລະກິດປົກປັກຮັກສາປະເທດຊາດຢ່າງສະເໝີຕົ້ນສະເໝີປາຍ. ຫຼຽນໄຊຊະນະເລີດລວມມີຊັ້ນ I, ຊັ້ນ II ແລະ ຊັ້ນIII, ສະນັ້ນຜູ້ທີ່ຈະໄດ້ຮັບການຍ້ອງຍໍໃນລະດັບໃດໜຶ່ງ ຫຼື ຊັ້ນໃດນັ້ນຕ້ອງມີການເລືອກເຟັ້ນ ແລະ ຊັ່ງຊາຜົນງານຕົວຈິງໃຫ້ເໝາະສົມກັບແຕ່ລະຊັ້ນ.

**ມາດຕາ 28. ຫຼຽນໄຊພິລະອາດຫານ**

ຫຼຽນໄຊພິລາດອາດຫານແມ່ນເພື່ອປະດັບ ຫຼື ມອບໃຫ້ບຸກຄົນ ແລະ ກົມກອງລວມໝູ່ທີ່ມີຜົນງານດີເດັ່ນ, ມີນໍ້າໃຈພິລະອາດຫານໃນການສູ້ຮົບ, ຮັບໃຊ້ສູ້ຮົບ, ກ້າຫານກອບກູ້ເອົາຄົນ, ກອບກູ້ເອົາ ຊັບສົມບັດຂອງລັດ, ຂອງປະຊາຊົນ ແລະ ເປັນຜູ້ທີ່ມີຄຸນນະທໍາດີ.

ຫຼຽນໄຊພິລະອາດຫານລວມມີຊັ້ນ I ຊັ້ນ II ແລະ ຊັ້ນ III, ສະນັ້ນການມອບ ຫລື ປະດັບແຕ່ລະຊັ້ນຂອງຫຼຽນໄຊພິລະອາດຫານນັ້ນຕ້ອງຈັດໃຫ້ເໝາະສົມກັບຜົນງານຕົວຈິງ.

**ມາດຕາ 29. ຫຼຽນໄຊມິດຕະພາບ**

ຫຼຽນໄຊມິດຕະພາບ ເປັນຫຼຽນຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອປະດັບ ຫລື ມອບໃຫ້ບຸກຄົນ ແລະ ການຈັດຕັ້ງຂອງຕ່າງປະເທດທີ່ໄດ້ສ້າງສາຍພົວພັນມິດຕະພາບ

ທີ່ດີຕໍ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມີການຊ່ວຍເຫລືອຊຶ່ງກັນ ແລະ ກັນດີ.

ຫຼຽນໄຊມິດຕະພາບ ແມ່ນເພື່ອມອບ ຫລື ປະດັບໃຫ້ຊ່ຽວຊານ, ນັກການທູດຂອງປະເທດຕ່າງໆທີ່ມີຜົນງານດີເດັ່ນໃນການປະຕິບັດໜ້າທີ່ວຽກງານ ແລະ ການທູດຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 30. ຫຼຽນ ແລະ ນາມມະຍົດວິລະຊົນແຫ່ງຊາດ**

1. **ຫຼຽນ ແລະ ນາມມະຍົດວິລະຊົນແຫ່ງຊາດ** ແມ່ນເພື່ອມອບ ຫລື ປະດັບໃຫ້ແກ່ບຸກຄົນທີ່ມີຜົນງານດີເດັ່ນເປັນພິເສດ, ກ້າຫານຍອມເສຍສະຫຼະຊີວິດເລືອດເນື້ອເພື່ອປະເທດຊາດ, ຕັດສິນໃຈເຮັດສຳເລັດໜ້າທີ່ໃດໜຶ່ງທີ່ມະຫັດສະຈັນຊຶ່ງຫາຍາກຜູ້ທີ່ຈະເຮັດໄດ້, ມີຄວາມອົດທົນໝຽວແໜ້ນ, ຕັ້ງໜ້າສູ້ຊົນປະຕິບັດໜ້າທີ່ຢ່າງບໍ່ຮູ້ອິດບໍ່ຮູ້ເມື່ອຍ ແລະ ມີຜົນສຳເລັດດີເດັ່ນໃນການປະຕິບັດໜ້າທີ່ວຽກງານບໍ່ວ່າໃນຂົງເຂດວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ຂົງເຂດການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ເຕັກນິກວິທະຍາສາດ, ເຕັກໂນໂລຢີ ແລະ ວຽກງານການຕ່າງປະເທດ; ເປັນຜູ້ທີ່ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສົມທຳປະຕິວັດ, ມີຄວາມສັດຊື່ບໍລິສຸດຈົ່ງຮັກພັກດີຕໍ່ຊາດຕໍ່ປະຊາຊົນ, ມີຄວາມຮູ້ - ຄວາມສາມາດ, ມີທັດສະນະຖືກຕ້ອງ ແລະ ຍາມໃດກໍ່ມີການຝຶກຝົນຫຼໍ່ຫຼອມຕົນເອງດ້ານຕ່າງໆຢູ່ສະເໝີ.

2. **ຫຼຽນ ແລະ ນາມມະຍົດວິລະຊົນແຫ່ງຊາດ** ແມ່ນເພື່ອມອບໃຫ້ກົມກອງລວມໝູ່ທີ່ມີຜົນງານຕາມເງື່ອນໄຂ-ມາດຖານດັ່ງນີ້:

- ມີຜົນງານໃຫຍ່ຫຼວງ, ດີເດັ່ນເປັນພິເສດໃນການປະກອບສ່ວນໃຫ້ແກ່ພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະ ພັດທະນາປະເທດຊາດ, ຈົ່ງຮັກພັກດີຕໍ່ຊາດ, ຕໍ່ລະບອບໃໝ່ ແລະ ຕໍ່ປະຊາຊົນ; ພາຍໃນມີຄວາມສາມັກຄີແໜ້ນແຟ້ນ, ການຈັດຕັ້ງພັກ, ການຈັດຕັ້ງມະຫາຊົນມີຄວາມປອດໃສ, ເຂັ້ມແຂງ.
- ເປັນການຈັດຕັ້ງທີ່ສ້າງຂຶ້ນຖືກຕ້ອງຕາມກົດໝາຍ, ມີຂະບວນວິວັດເຄື່ອນໄຫວມີຜົນສຳເລັດດີເດັ່ນລຽນຕິດແຕ່ລະໄລຍະ ຫລື ມີຜົນສຳເລັດໃຫຍ່ຫລວງແບບບັງເອີນທີ່ມະຫັດສະຈັນທີ່ຫາຍາກ.

**ມາດຕາ 31. ຫຼຽນ ແລະ ນາມມະຍົດວິລະຊົນແຮງງານ**

**1.ຫຼຽນ ແລະ ນາມມະຍົດວິລະຊົນແຮງງານເພື່ອມອບ ຫລື ປະດັບໃຫ້ບຸກຄົນທີ່ມີມາດຖານດັ່ງນີ້:**

- ມີການຄົ້ນຄວ້າໄດ້ລິຂະສິດອັນໃໝ່ທີ່ຜູ້ອື່ນຄົ້ນຄ້ວາບໍ່ໄດ້, ສາມາດປະດິດສ້າງໄດ້ອັນໃໝ່ທາງດ້ານເຕັກນິກວິທະຍາສາດ ຫລື ບົດນິພົນທີ່ດີເດັ່ນລະດັບຊາດ.
- ສ້າງໄດ້ຜົນງານໃຫຍ່ຫລວງດີເດັ່ນເປັນພິເສດໃນການສ້າງສາພັດທະນາດ້ານສະຕິປັນຍາ, ສີມືແຮງງານ, ດຸໝັ່ນອອກແຮງງານດ້ວຍຕົນມື ແລະ ມັນສະໝອງ, ສ້າງໄດ້ຜະລິດຕະພັນໃໝ່ທາງດ້ານວິທະຍາສາດເຕັກນິກທີ່ຫາຍາກຊຶ່ງບໍ່ມີຜູ້ເຮັດໄດ້ ຫລື ໜ້ອຍຄົນເຮັດໄດ້; ອຸທິດສະຕິປັນຍາວັດຖຸເງິນ - ຄຳໃຫ້ແກ່ການພັດທະນາເສດຖະກິດ - ສັງຄົມໂດຍບໍ່ຮຽກຮ້ອງຄຸນຄ່າຕອບແທນແຕ່ຢ່າງໃດ.
- ມີຂະບວນວິວັດເຄື່ອນໄຫວກິດຈະການອອກແຮງງານໃນໄລຍະເວລາທີ່ແນ່ນອນ, ມີຜົນສຳເລັດດີເດັ່ນລຽນຕິດເປັນທີ່ຍອມຮັບຈາກສັງຄົມ, ໄດ້ຮັບຄັດເລືອກເປັນນັກຮົບອອກແຮງງານດີເດັ່ນຂັ້ນກະຊວງ-ອົງການ, ທ້ອງຖິ່ນ ແລະ ຮາກຖານລຽນຕິດ 3 ເທື່ອຂຶ້ນໄປ ແລະ ໄດ້ເປັນນັກຮົບ

ອອກແຮງງານດີເດັ່ນແຫ່ງຊາດຢ່າງໜ້ອຍໜຶ່ງຄັ້ງຂຶ້ນໄປ.

**2. ຫຼຽນ ແລະ ນາມມະຍົດວິລະຊົນແຮງງານ**

ຫຼຽນ ແລະ ນາມມະຍົດວິລະຊົນແຮງງານເພື່ອມອບໃຫ້ການຈັດຕັ້ງລວມໝູ່ທີ່ໄດ້ຕາມມາດຖານ ດັ່ງນີ້:

- ໄດ້ຮັບນາມມະຍົດເປັນກົມກອງອອກແຮງງານດີເດັ່ນ ແລະ ໄດ້ຮັບທຸງໄຊແຂ່ງຂັນອອກແຮງງານຂັ້ນກະຊວງ, ອົງການ, ນະຄອນ ແລະ ແຂວງແຕ່ 2 ຫາ 3 ເທື່ອລຽນຕິດ, ໄດ້ຮັບນາມມະຍົດເປັນກົມກອງອອກແຮງງານດີເດັ່ນແຫ່ງຊາດ ແລະ ໄດ້ຮັບທຸງໄຊແຂ່ງຂັນຂັ້ນລັດຖະບານແຕ່ໜຶ່ງເທື່ອຂຶ້ນໄປ.

- ເປັນກົມກອງທີ່ໄດ້ຮັບການສ້າງຕັ້ງຂຶ້ນຖືກຕ້ອງຕາມກົດໝາຍ, ມີຂະບວນວິວັດເຄື່ອນໄຫວວຽກງານດີເດັ່ນລຽນຕິດ, ສ້າງໄດ້ຜະລິດຕະພັນທີ່ດີມີຄຸນນະພາບຮັບໃຊ້ສັງຄົມຢ່າງຫຼວງຫລາຍ.

- ສ້າງໄດ້ຜົນງານດີເດັ່ນເປັນພິເສດທີ່ກົມກອງອື່ນເຮັດບໍ່ໄດ້.

- ພາຍໃນມີຄວາມສາມັກຄີດີ, ການຈັດຕັ້ງພັກ, ບັນດາອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງສັງຄົມ - ການເມືອງຕ່າງໆມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ.

**ມາດຕາ 32. ຫຼຽນ ແລະ ນາມມະຍົດນັກຮົບແຂ່ງຂັນແຫ່ງຊາດ**

ຫຼຽນ ແລະ ນາມມະຍົດນັກຮົບແຂ່ງຂັນແຫ່ງຊາດແມ່ນເພື່ອມອບ ຫລື ປະດັບໃຫ້ແກ່ບຸກຄົນທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນເປັນພິເສດ, ມີຄວາມສາມາດ, ອົງອາດກ້າຫານເປັນພິເສດປະກອບສ່ວນເລືອດເນື້ອ, ເຫື່ອແຮງເຂົ້າໃນຂົງເຂດການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ເຕັກນິກວິທະຍາສາດ, ເຕັກໂນໂລຢີ, ການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ແລະ ວຽກງານການຕ່າງປະເທດ.

**ມາດຕາ 33. ຫຼຽນ ແລະ ນາມມະຍົດນັກຮົບແຂ່ງຂັນອອກແຮງງານດີເດັ່ນແຫ່ງຊາດ**

1. ຫຼຽນ ແລະ ນາມມະຍົດນັກຮົບແຂ່ງຂັນອອກແຮງງານດີເດັ່ນແຫ່ງຊາດ, ແມ່ນເພື່ອມອບໃຫ້ບຸກຄົນທີ່ມີຜົນງານດີເດັ່ນໃນການອອກແຮງງານ, ມີປັດໃຈໃໝ່, ມີຫົວຄິດປະດິດສ້າງ, ມີຜົນສຳເລັດດີເດັ່ນ, ຊື່ສັດບໍລິສຸດ, ມີຄວາມສາມາດໃນການຄົ້ນຄວ້າ, ການຂີດຂຽນ, ການປະດິດສ້າງດ້ານຕ່າງໆ, ການດັດແປງເຕັກນິກ ຫລື ນຳໃຊ້ເຕັກໂນໂລຢີອັນໃໝ່ເພື່ອຮັບໃຊ້ສັງຄົມ, ຮັບໃຊ້ການຜະລິດ, ສາມາດຍົກສະມັດຕະພາບຂອງການຜະລິດສູງຂຶ້ນເລື້ອຍໆ ແລະ ເປັນແບບຢ່າງທີ່ດີເດັ່ນໃຫ້ຜູ້ອື່ນ, ຊຶ່ງໄດ້ຮັບນາມມະຍົດເປັນນັກຮົບແຂ່ງຂັນອອກແຮງງານດີເດັ່ນຂັ້ນກະຊວງ, ອົງການທຽບເທົ່າກະຊວງ, ຂັ້ນແຂວງ ແລະ ນະຄອນ ມາແລ້ວລຽນຕິດແຕ່ 2 ເທື່ອຂຶ້ນໄປ.

2. ຫຼຽນ ແລະ ນາມມະຍົດກົມກອງແຂ່ງຂັນອອກແຮງງານດີເດັ່ນແຫ່ງຊາດ ແມ່ນເພື່ອມອບໃຫ້ ກົມກອງລວມໝູ່ທີ່ມີຜົນງານດີເດັ່ນໃນການອອກແຮງງານ, ມີປັດໃຈໃໝ່, ມີຫົວຄິດປະດິດສ້າງ, ມີຜົນສຳເລັດດີ, ຊື່ສັດບໍລິສຸດ, ມີຄວາມສາມາດດັດແປງເຕັກນິກ ຫລື ນຳໃຊ້ເຕັກໂນໂລຢີອັນໃໝ່ເພື່ອຮັບໃຊ້ສັງຄົມ, ຮັບໃຊ້ການຜະລິດ, ສາມາດຍົກສະມັດຕະພາບການຜະລິດສູງຂຶ້ນເລື້ອຍໆ, ການຈັດຕັ້ງມີຄວາມສະຫງົບ, ໜັກແໜ້ນ, ມີຄວາມປອດໃສ ແລະ ເຂັ້ມແຂງ, ຊຶ່ງໄດ້ຮັບນາມມະຍົດເປັນກົມກອງລວມໝູ່ແຂ່ງຂັນອອກແຮງງານດີເດັ່ນຂັ້ນກະຊວງ, ອົງການທຽບເທົ່າກະຊວງ, ຂັ້ນແຂວງ ແລະ ນະຄອນ ມາແລ້ວລຽນຕິດ 3 ເທື່ອຂຶ້ນໄປ.

**ມາດຕາ 34. ຫລຽນ ແລະ ນາມມະຍົດສິລະປິນລາວ**

ສິລະປິນລາວແມ່ນຜູ້ທີ່ເຄື່ອນໄຫວດ້ານສິລະປະວັດທະນະທຳໃນຂະແໜງການຕ່າງໆທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນ, ມີປະສົບການຫຼາຍປີ ແລະ ເປັນທີ່ຍອມຮັບຈາກມະຫາຊົນຢ່າງກ້ວາງຂວາງ.

1. **ຫຼຽນ ແລະ ນາມມະຍົດສິລະປິນແຫ່ງຊາດ :**

ຫຼຽນ ແລະ ນາມມະຍົດສິລະປິນແຫ່ງຊາດແມ່ນເພື່ອມອບໃຫ້ບຸກຄົນຜູ້ທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນ, ມີທັດສະນະຫຼັກໝັ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຈົ່ງຮັກພັກດີຕໍ່ປະເທດຊາດ, ມີຄວາມຕື່ນຕົວ, ມີພອນສະຫັວນ, ມີຫົວຄິດປະດິດສ້າງ, ເປັນແບບຢ່າງທີ່ດີ, ມີປະສົບການ,ໄດ້ຜ່ານຂະບວນການວຽກງານສິລະປະວັດທະນະທຳ ແລະ ວິຊາອາຊີບໃນຂົງເຂດນີ້ແຕ່ 15 ປີຂຶ້ນໄປ.

2. **ຫຼຽນ ແລະ ນາມມະຍົດສິລະປິນດີເດັ່ນ:**

ຫຼຽນ ແລະ ນາມມະຍົດສິລະປິນດີເດັ່ນແມ່ນເພື່ອມອບໃຫ້ຜູ້ທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນ, ມີທັດສະນະຫຼັກໝັ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຈົ່ງຮັກພັກດີຕໍ່ປະເທດຊາດ, ມີຄວາມຕື່ນຕົວ, ມີພອນສະຫັວນ, ມີຫົວຄິດປະດິດສ້າງ, ເປັນແບບຢ່າງທີ່ດີ, ມີປະສົບການ, ໄດ້ຜ່ານຂະບວນການວຽກງານສິລະປະວັດທະນະທຳ ແລະ ວິຊາອາຊີບແຕ່ 10 ປີຂຶ້ນໄປ.

**ມາດຕາ 35. ຫຼຽນ ແລະ ນາມມະຍົດຄູແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ນາມມະຍົດຄູແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນນາມມະຍົດທີ່ໝາຍເຖິງກຽດສັກສີອັນສູງສົ່ງທີ່ປະເທດຊາດມອບໃຫ້ແກ່ຄູຜູ້ທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນຕໍ່ປະເທດຊາດ ແລະ ຕໍ່ການພັດທະນາການສຶກສາຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

1. **ຫຼຽນ ແລະ ນາມມະຍົດຄູແຫ່ງຊາດ**

ຫຼຽນ ແລະ ນາມມະຍົດຄູແຫ່ງຊາດແມ່ນເພື່ອມອບໃຫ້ຜູ້ທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນ, ມີຄຸນສົມບັດ, ມີຄຸນນະທຳ, ມີຫົວຄິດປະດິດສ້າງ, ມີນ້ຳໃຈຮັບໃຊ້ປະຊາຊົນ, ເປັນແບບຢ່າງທີ່ດີ, ມີປະສົບການ, ມີວິທີສິດສອນທີ່ດີສາມາດໃຫ້ຜູ້ອື່ນໄປຜັນຂະຫຍາຍຢ່າງມີໝາກຜົນດີ,ໄດ້ຜ່ານຂະບວນການສິດສອນ ແລະ ການຄຸ້ມຄອງນັກຮຽນ-ນັກສຶກສາແຕ່ 25 ປີ ຂຶ້ນໄປ.

2. **ຫຼຽນ ແລະ ນາມມະຍົດຄູປະຊາຊົນ**

ຫຼຽນ ແລະ ນາມມະຍົດຄູປະຊາຊົນແມ່ນເພື່ອມອບໃຫ້ຜູ້ທີ່ມີຄຸນງາມຄວາມດີ,ມີຜົນງານດີເດັ່ນ, ມີຄຸນສົມບັດ, ມີຄຸນນະທຳ,ມີຫົວຄິດປະດິດສ້າງ, ມີນ້ຳໃຈຮັບໃຊ້ປະຊາຊົນ, ເປັນແບບຢ່າງທີ່ດີ, ມີປະສົບການ,ໄດ້ ຜ່ານຂະບວນການສິດສອນ ແລະ ການຄຸ້ມຄອງນັກຮຽນ-ນັກສຶກສາແຕ່ 20 ປີຂຶ້ນໄປ.

**ມາດຕາ 36. ຫຼຽນ ແລະ ນາມມະຍົດພະນັກງານສາທາລະນະສຸກແຫ່ງສາທາລະນະລັດ ປະຊາທິປະໄຕ ປະ ຊາຊົນລາວ**

ນາມມະຍົດພະນັກງານສາທາລະນະສຸກແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວແມ່ນນາມມະຍົດທີ່ໝາຍເຖິງກຽດສັກສີອັນສູງສົ່ງທີ່ປະເທດຊາດມອບໃຫ້ແກ່ພະນັກງານສາທາລະນະສຸກຜູ້ທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນຕໍ່ປະເທດຊາດ ແລະ ຕໍ່ການພັດທະນາດ້ານສາ

ທາລະນະສຸກຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**1. ຫຼຽນ ແລະ ນາມມະຍົດແພດແຫ່ງຊາດ :**

ຫຼຽນ ແລະ ນາມມະຍົດແພດແຫ່ງຊາດແມ່ນເພື່ອມອບໃຫ້ຜູ້ທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນ, ມີຄຸນສົມບັດ, ມີຄຸນນະທຳ, ມີຫົວຄິດປະດິດສ້າງ, ມີນ້ຳໃຈຮັບໃຊ້ປະຊາຊົນ, ມີຈັນຍາທຳ, ເປັນແບບຢ່າງທີ່ດີ, ມີປະສົບການ, ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກມະຫາຊົນ, ມີຜົນງານດີເດັ່ນ ແລະ ໄດ້ຜ່ານຂະບວນການວຽກງານສາທາລະນະສຸກຢ່າງຕໍ່ເນື່ອງແຕ່ 25 ປີ ຂຶ້ນໄປ( 20 ປີ ສຳລັບເຂດຫ່າງໄກສອກຫຼີກ, ເຂດທຸລະກັນດານ ).

**2. ຫຼຽນ ແລະ ນາມມະຍົດແພດປະຊາຊົນ :**

ຫຼຽນ ແລະ ນາມມະຍົດແພດປະຊາຊົນແມ່ນເພື່ອມອບໃຫ້ຜູ້ທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນ,ມີຄຸນສົມບັດ, ມີຄຸນນະທຳ,ມີຫົວຄິດປະດິດສ້າງ, ມີນ້ຳໃຈຮັບໃຊ້ປະຊາຊົນ, ມີຈັນຍາທຳ, ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກມະຫາຊົນ, ມີຜົນງານດີເດັ່ນ, ເປັນແບບຢ່າງທີ່ດີ, ມີປະສົບການ ແລະ ໄດ້ຜ່ານຂະບວນການວຽກງານສາທາລະນະສຸກຢ່າງຕໍ່ເນື່ອງແຕ່ 20 ປີ ຂຶ້ນໄປ( 15 ປີ ສຳລັບເຂດຫ່າງໄກສອກຫຼີກ,ເຂດທຸລະກັນດານ ).

**ມາດຕາ 37. ຫຼຽນ ແລະ ນາມມະຍົດນັກຮົບແຂ່ງຂັນອອກແຮງງານດີເດັ່ນຂັ້ນກະຊວງ, ອົງການ, ນະຄອນ ແລະ ແຂວງ**

1. ຫຼຽນ ແລະ ນາມມະຍົດນັກຮົບແຂ່ງຂັນອອກແຮງງານດີເດັ່ນຂັ້ນກະຊວງ, ອົງການ, ນະຄອນ ແລະ ແຂວງ ແມ່ນເພື່ອມອບໃຫ້ບຸກຄົນທີ່ມີຜົນງານດີເດັ່ນໃນການອອກແຮງງານ, ມີຫົວຄິດປະດິດສ້າງ, ຜ່ານຜ່າຄວາມທຸກຍາກ , ຊື່ສັດບໍລິສຸດ, ມີຄວາມຮູ້, ມີຄວາມສາມາດຊຶ່ງໄດ້ຮັບຮອງເປັນນັກຮົບແຂ່ງຂັນອອກແຮງງານດີເດັ່ນຂັ້ນຮາກຖານມາແລ້ວລຽນຕິດແຕ່ສອງເທື່ອຂຶ້ນໄປ.

2. ຫຼຽນ ແລະ ນາມມະຍົດນັກຮົບແຂ່ງຂັນອອກແຮງງານດີເດັ່ນຂັ້ນກະຊວງ, ອົງການ, ນະຄອນ ແລະ ແຂວງ ແມ່ນເພື່ອມອບໃຫ້ກົມກອງລວມໝູ່ທີ່ສ້າງໄດ້ຜົນງານດີເດັ່ນໃນການອອກແຮງງານ, ມີຫົວຄິດປະດິດສ້າງ, ຜ່ານຜ່າຄວາມທຸກຍາກ, ປະຕິບັດພັນທະໃຫ້ລັດຖືກຕ້ອງຕາມລະບຽບກົດໝາຍ, ມີປະສິດທິຜົນ ແລະ ເຮັດສຳເລັດໜ້າທີ່ວຽກງານຕາມມາດຖານເງື່ອນໄຂດັ່ງນີ້ :

- ປະດິດສ້າງ, ຜ່ານຜ່າຄວາມທຸກຍາກ, ສຳເລັດໜ້າທີ່ວຽກງານເປັນຢ່າງດີ, ປະຕິບັດພັນທະໃຫ້ລັດຖືກຕ້ອງຕາມລະບຽບກົດໝາຍ.
- ມີຂະບວນການແຂ່ງຂັນຢ່າງເປັນປົກກະຕິ, ຖືກຕ້ອງຕົວຈິງ ແລະ ມີປະສິດທິຜົນ.
- ມີບຸກຄົນໃນກົມກອງລວມໝູ່ເຮັດສຳເລັດໜ້າທີ່ວຽກງານທີ່ໄດ້ຮັບການມອບໝາຍ100 % ໃນນັ້ນຕ້ອງມີ 70 % ສາມາດບັນລຸເປັນນັກຮົບແຂ່ງຂັນອອກແຮງງານດີເດັ່ນຂັ້ນຮາກຖານ.
- ໃນກົມກອງລວມໝູ່ບໍ່ມີບຸກຄົນໃດຖືກປະຕິບັດວິໄນແຕ່ຂັ້ນກ່າວເຕືອນຂຶ້ນໄປ.
- ມີຄວາມສາມັກຄີພາຍໃນ, ເປັນແບບຢ່າງໃນການປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ.

**ມາດຕາ38. ຫຼຽນ ແລະ ນາມມະຍົດນັກຮົບແຂ່ງຂັນອອກແຮງງານດີເດັ່ນຂັ້ນເມືອງ ແລະສະຖາບັນຕ່າງໆ**

ຫຼຽນ ແລະ ນາມມະຍົດນັກຮົບແຂ່ງຂັນອອກແຮງງານດີເດັ່ນຂັ້ນເມືອງ ແລະ ສະຖາບັນຕ່າງໆ ແມ່ນເພື່ອມອບໃຫ້ບຸກຄົນ ແລະ ກົມກອງລວມໝູ່ທີ່ສ້າງໄດ້ຜົນງານດີເດັ່ນໃນການອອກແຮງງານ ແລະ ເຮັດສຳເລັດໜ້າທີ່ວຽກງານ, ມີຄວາມຊື່ສັດບໍລິສຸດ, ມີຄວາມຮູ້, ຄວາມສາມາດຊຶ່ງໄດ້ຮັບຮອງ

ເປັນບຸກຄົນ ແລະ ກົມກອງລວມໝູ່ແຂ່ງຂັນອອກແຮງງານດີເດັ່ນຂັ້ນຮາກຖານ ຫຼື ໜ່ວຍງານຕ່າງໆ ມາແລ້ວລຽນຕິດແຕ່ສອງເທື່ອຂຶ້ນໄປ.

**ມາດຕາ 39. ທຸງໄຊແຂ່ງຂັນຂັ້ນລັດຖະບານ**

ທຸງໄຊແຂ່ງຂັນຂັ້ນລັດຖະບານແມ່ນເພື່ອມອບໃຫ້ກົມກອງລວມໝູ່ທີ່ສ້າງໄດ້ຜົນງານດີເດັ່ນໃນການອອກແຮງງານ, ມີຜົນສຳເລັດດີ,ມີຄວາມຊື່ສັດບໍລິສຸດ, ເຮັດສຳເລັດໜ້າທີ່ວຽກງານລື່ນຄາດໝາຍຕາມເງື່ອນໄຂມາດຖານດັ່ງນີ້:

- ມີຜົນງານດີເດັ່ນ, ຊື່ສັດບໍລິສຸດ, ເຮັດສຳເລັດໜ້າທີ່ວຽກງານລື່ນຄາດໝາຍ, ເປັນກົມກອງທີ່ໄດ້ຮັບຮອງເປັນກົມກອງແຂ່ງຂັນອອກແຮງງານດີເດັ່ນຂັ້ນກະຊວງ, ອົງການ, ນະຄອນ ແລະ ແຂວງ, ມີປັດໃຈໃໝ່ເກີດຂຶ້ນ, ເປັນຕົວແບບສາມາດໃຫ້ທົ່ວປະເທດຮ່ຳຮຽນເອົາ, ນຳໜ້າໃນການປະຢັດມັດທະຍັດ,ບໍ່ຟູມເຟືອຍ, ບໍ່ສໍ້ລາດບັງຫຼວງ ແລະໄດ້ຮັບຄວາມເຊື່ອຖື, ໄວ້ວາງໃຈຈາກປະຊາຊົນ.
- ພາຍໃນມີຄວາມສາມັກຄີ, ການຈັດຕັ້ງພັກ, ການຈັດຕັ້ງມະຫາຊົນມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ.

**ມາດຕາ 40. ທຸງໄຊແຂ່ງຂັນຂັ້ນກະຊວງ, ອົງການ, ນະຄອນ ແລະ ແຂວງ**

ທຸງໄຊແຂ່ງຂັນຂັ້ນກະຊວງ, ອົງການ, ນະຄອນ ແລະ ແຂວງແມ່ນເພື່ອມອບໃຫ້ກົມກອງລວມໝູ່ທີ່ສ້າງໄດ້ຜົນງານດີເດັ່ນໃນການອອກແຮງງານມີຜົນສຳເລັດດີ, ມີຄວາມຊື່ສັດບໍລິສຸດ, ເຮັດສຳເລັດໜ້າ ທີ່ວຽກງານລື່ນຄາດໝາຍຕາມມາດຖານດັ່ງນີ້ :

1. ສຳເລັດໜ້າທີ່ວຽກງານທີ່ໄດ້ຮັບການມອບໝາຍ ແລະ ລື່ນຄາດໝາຍທີ່ວາງໄວ້, ເປັນກົມກອງແຂ່ງຂັນອອກແຮງງານດີເດັ່ນຂັ້ນເມືອງ ແລະ ສະຖາບັນຕ່າງໆມາແລ້ວລຽນຕິດແຕ່ສອງເທື່ອຂຶ້ນໄປ.
2. ມີປັດໃຈໃໝ່ສາມາດເປັນບົດຮຽນໃຫ້ກົມກອງອື່ນຮ່ຳຮຽນເອົາ.
3. ພາຍໃນມີຄວາມສາມັກຄີດີ,ການຈັດຕັ້ງພັກ,ການຈັດຕັ້ງມະຫາຊົນປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ; ເປັນກົມກອງທີ່ຕັ້ງໜ້າປະຕິບັດການປະຢັດ, ບໍ່ຟູມເຟືອຍ, ບໍ່ມີການສໍ້ລາດບັງຫຼວງ ແລະ ບໍ່ມີສິ່ງຫຍໍ້ທໍ້ຕ່າງໆ.

**ມາດຕາ 41. ຫຼຽນກາພັດທະນາ**

ຫຼຽນກາພັດທະນາເປັນຫຼຽນຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວເພື່ອປະດັບ ຫລື ມອບໃຫ້ບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນ, ມີຄຸນງາມຄວາມດີປະກອບສ່ວນທາງດ້ານວັດຖຸ, ເງິນຄຳໃຫ້ແກ່ການພັດທະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ບຸກຄົນ ແລະ ການຈັດຕັ້ງນັບທັງພາຍໃນ ແລະ ຕ່າງປະເທດທີ່ມີຄວາມຈິງໃຈປະກອບສ່ວນຊ່ວຍເຫຼືອລ້າທາງດ້ານເງິນ, ຄຳ ຫຼື ວັດຖຸທີ່ມີຄຸນຄ່າສູງໂດຍບໍ່ຮຽກຮ້ອງຄ່າຕອບແທນຈະໄດ້ຮັບການຍ້ອງຍໍຈາກລັດຖະບານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ດ້ວຍຫຼຽນກາພັດທະນາຕາມເຫັນເໝາະສົມ;

**ມາດຕາ 42. ຫຼຽນກາແຮງງານ**

ຫຼຽນກາແຮງງານເປັນຫຼຽນທີ່ມີຄຸນຄ່າຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວເພື່ອຍ້ອງຍໍບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການອອກແຮງງານທາງກາຍ ແລະ ມັນສະໝອງ, ການຄົ້ນຄວ້າຂີດຊຽນ, ຜະລິດອອກສິ່ງທີ່ມີປະໂຫຍດໃຫ້ສັງຄົມ, ປະກອບສ່ວນເຂົ້າໃນ

ການປົກ ປັກຮັກສາ ແລະ ພັດທະນາປະເທດຊາດ;

1. ຫຼຽນກາແຮງງານເພື່ອມອບ ຫຼື ປະດັບໃຫ້ແກ່ບຸກຄົນທີ່ມີຜົນງານດີເດັ່ນໃນການຄົ້ນຄ້ວາ, ການປະຕິບັດໜ້າທີ່ວຽກງານສຳເລັດຜົນດີ ແລະ ໄດ້ຮັບໃບຍ້ອງຍໍຂອງລັດຖະບານມາແລ້ວ.

2. ຫຼຽນກາແຮງງານເພື່ອມອບໃຫ້ກົມກອງລວມໝູ່ທີ່ບັນລຸຕາມເງື່ອນໄຂ, ມາດຖານດັ່ງນີ້:

- ໄດ້ຮັບນາມມະຍົດເປັນກົມກອງອອກແຮງງານດີເດັ່ນຂັ້ນກະຊວງ, ອົງການ, ຂັ້ນແຂວງ, ນະຄອນ ແລະ ໄດ້ຮັບທຸງໄຊແຂ່ງຂັນຂັ້ນກະຊວງ, ອົງການ, ນະຄອນ ແລະ ຂັ້ນແຂວງໜຶ່ງເທື່ອຂຶ້ນໄປ.

- ສ້າງໄດ້ຜົນງານດີເດັ່ນ ຫຼື ມີຂະບວນວິວັດແຫ່ງການອຸທິດເຫື່ອແຮງ, ສະຕິປັນຍາດົນນານໃຫ້ແກ່ການຈັດຕັ້ງ ແລະ ປະເທດຊາດ.

**ມາດຕາ 43. ຫຼຽນກາມິດຕະພາບ**

ຫຼຽນກາມິດຕະພາບເປັນຫຼຽນຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນເພື່ອມອບ ຫຼື ປະດັບໃຫ້ແກ່ບຸກຄົນ ແລະ ການຈັດຕັ້ງຂອງຕ່າງປະເທດທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນໃນການພົວພັນຮ່ວມມື ແລະ ເສີມສ້າງສາຍພົວພັນມິດຕະພາບອັນດີງາມຂອງບັນດາປະເທດໃນໂລກຕໍ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຫຼຽນກາມິດຕະພາບ ແມ່ນເພື່ອມອບ ຫລື ປະດັບໃຫ້ແກ່ນັກຊ່ຽວຊານ, ນັກການທູດຂອງຕ່າງປະເທດທີ່ມີຜົນງານດີເດັ່ນໃນປະຕິບັດໜ້າທີ່ວຽກງານ ແລະ ການທູດຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 44. ຫຼຽນກາລະນຶກ**

ຫຼຽນກາລະນຶກແມ່ນເພື່ອມອບໃຫ້ບຸກຄົນທີ່ໄດ້ອຸທິດເຫື່ອແຮງ, ສະຕິປັນຍາໃຫ້ແກ່ພາລະກິດປົກປັກຮັກສາ ແລະ ພັດທະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

## ໝວດທີ V .

## ຄຸນຄ່າຂອງໃບປະເທດຊາດຈາລຶກບຸນຄຸນ ແລະ ໃບຍ້ອງຍໍສັນລະເສີນປະເພດຕ່າງໆ.

**ມາດຕາ 45. ໃບປະເທດຊາດຈາລຶກບຸນຄຸນ**

ໃບປະເທດຊາດຈາລຶກບຸນຄຸນເພື່ອມອບໃຫ້ບຸກຄົນທີ່ມີຜົນງານດີເດັ່ນທີ່ໄດ້ອຸທິດເຫື່ອແຮງ, ເລືອດເນື້ອ, ຍອມເສຍສະຫຼະຊີວິດໃນການສູ້ລົບ ແລະ ການຮັບໃຊ້ສູ້ລົບຢູ່ສະໜາມຮົບໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 46. ໃບຍ້ອງຍໍປະເພດຕ່າງໆ**

ເພື່ອມອບໃຫ້ບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນໄດ້ປະກອບສ່ວນໃຫ້ແກ່ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ, ຊຶ່ງລວມມີປະເພດຍ້ອງຍໍສັນລະເສີນດັ່ງນີ້ :

1. ໃບຍ້ອງຍໍລັດຖະບານ.
2. ໃບຍ້ອງຍໍ ແລະ ກາລະນຶກ ຂອງກະຊວງ-ອົງການຂັ້ນສູນກາງ.
3. ໃບຍ້ອງຍໍ ແລະ ກາລະນຶກ ຂອງແຂວງ, ນະຄອນ ແລະ ເມືອງ.
4. ໃບຍ້ອງຍໍ ຫຼື ໃບສັນລະເສີນຂອງສະຖາບັນຕ່າງໆ.

## ໝວດທີ VI .

## ສິດ, ຄວາມຮັບຜິດຊອບໃນການຕົກລົງຍ້ອງຍໍ ແລະການປະກອບເອກະສານເພື່ອສະເໜີການຍ້ອງຍໍ.

### ມາດຕາ 47. ສິດຕົກລົງຍ້ອງຍໍ

1.ປະທານປະເທດຕົກລົງປະດັບ ຫຼື ມອບຫຼຽນຄໍາແຫ່ງຊາດ, ຫຼຽນໂພໄຊລ້ານຊ້າງ, ບັນດາຫຼຽນໄຊ,ນາມມະຍົດວິລະຊົນແຫ່ງຊາດ, ນາມມະຍົດວິລະຊົນແຮງງານ, ນາມມະຍົດສິລະປິນແຫ່ງຊາດ, ນາມມະຍົດຄູແຫ່ງຊາດ ແລະ ນາມມະຍົດແພດແຫ່ງຊາດ.

2. ນາຍົກລັດຖະມົນຕີຕົກລົງປະດັບ ຫຼື ມອບຫຼຽນກາທຸກປະເພດ,ໃບຍ້ອງຍໍຂອງລັດຖະບານ, ທຸງໄຊແຂ່ງຂັນຂັ້ນລັດຖະບານ, ນາມມະຍົດນັກຮົບແຂ່ງຂັນອອກແຮງງານດີເດັ່ນແຫ່ງຊາດ, ນາມມະຍົດຄູປະຊາຊົນ, ນາມມະຍົດແພດປະຊາຊົນ ແລະ ນາມມະຍົດສິລະປິນດີເດັ່ນ.

3. ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າຄອງນະຄອນ, ເຈົ້າແຂວງຕົກລົງມອບໃບຍ້ອງຍໍ, ທຸງໄຊແຂ່ງຂັນ, ນາມມະຍົດນັກຮົບແຂ່ງຂັນອອກແຮງງານດີເດັ່ນຂັ້ນກະຊວງ, ອົງການ, ນະຄອນ ແລະ ແຂວງໃຫ້ບຸກຄົນ ແລະ ກົມກອງລວມໝູ່ຂັ້ນຂອງຕົນ.

4. ລັດຖະມົນຕີວ່າການກະຊວງປ້ອງກັນປະເທດຕົກລົງປະດັບ ຫຼື ມອບຫຼຽນໄຊພິລະອາດຫານໃຫ້ບຸກຄົນ ແລະ ກົມກອງລວມໝູ່ຕາມສິດ ແລະ ຄວາມຮັບຜິດຊອບຂອງຕົນ.

5. ເຈົ້າເມືອງ, ຫົວໜ້າກົມ ແລະ ຫົວໜ້າສະຖາບັນຕ່າງໆທີ່ມີຖານະທຽບເທົ່າຕົກລົງມອບໃບຍ້ອງຍໍ ແລະ ນາມມະຍົດນັກຮົບແຂ່ງຂັນອອກແຮງງານດີເດັ່ນຂັ້ນເມືອງ, ສະຖາບັນຕ່າງໆໃຫ້ບຸກຄົນ ແລະ ກົມກອງລວມໝູ່ຂັ້ນຂອງຕົນ.

6. ບຸກຄົນ ຫຼື ນິຕິບຸກຄົນທີ່ມີສິດຕົກລົງການຍ້ອງຍໍແມ່ນບຸກຄົນ ຫຼື ນິຕິບຸກຄົນນັ້ນເປັນຜູ້ມອບ ຫຼື ປະດັບການຍ້ອງຍໍ, ຖ້າມີຄວາມຈໍາເປັນກໍ່ອາດຈະມອບສິດການປະດັບ ຫຼື ມອບການຍ້ອງຍໍນັ້ນໃຫ້ບຸກຄົນ ຫຼື ນິບຸກຄົນອື່ນເພື່ອມອບ ຫຼື ປະດັບການຍ້ອງຍໍແທນ.

7. ກະຊວງການຕ່າງປະເທດ ຫຼື ສະຖານເອກອັກຄະລັດຖະທູດລາວປະຈໍາຢູ່ບັນດາປະເທດຕ່າງໆຈະໄດ້ຮັບການມອບສິດເພື່ອມອບ ຫຼື ປະດັບການຍ້ອງຍໍໃຫ້ແກ່ບຸກຄົນ, ການຈັດຕັ້ງຂອງຕ່າງປະເທດຢູ່ປະເທດນັ້ນຕາມການຕົກລົງຂອງລັດຖະບານ.

8. ໃນກໍລະນີມີຄວາມຈໍາເປັນລັດຖະບານຈະຕົກລົງຍ້ອງຍໍໂດຍບັງເອີນ ຫຼື ຕົກລົງການຍ້ອງຍໍເພື່ອຮັບໃຊ້ຄວາມຮຽກຮ້ອງຕ້ອງການດ້ານການເມືອງ, ການປ້ອງກັນຄວາມສະຫງົບ, ການປ້ອງກັນຊາດ, ການສູ້ຮົບ, ການປະຕິບັດໜ້າທີ່ວຽກງານ ແລະ ອື່ນໆທີ່ເຫັນວ່າມີຄວາມຈໍາເປັນ.

### ມາດຕາ 48. ຄວາມຮັບຜິດຊອບການຍ້ອງຍໍ

1. ລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າຄອງນະຄອນ, ເຈົ້າແຂວງມີຄວາມຮັບຜິດຊອບໃນການຄົ້ນຄວ້າພິຈາລະນາ ແລະ ສະເໜີຮູບການຍ້ອງຍໍຕ່າງໆເພື່ອໃຫ້ລັດຖະບານພິຈາລະນາ ແລະ ຕົກລົງໂດຍຜ່ານອົງການຄຸ້ມຄອງວຽກງານແຂ່ງຂັນ-ຍ້ອງຍໍສູນກາງ.

2. ຄະນະຈັດຕັ້ງສູນກາງພັກ(ສະຖາບັນແຂ່ງຂັນ-ຍ້ອງຍໍ) ມີຄວາມຮັບຜິດຊອບຄົ້ນຄວ້າພິຈາລະນາບັນດາເອກະສານຕ່າງໆທີ່ພົວພັນເຖິງການແຂ່ງຂັນ-ຍ້ອງຍໍຈາກພາກສ່ວນຕ່າງໆເພື່ອສະເໜີຂັ້ນເທິງພິຈາລະນາ ແລະ ຕົກລົງອະນຸມັດ.

3. ທຸກໆເອກະສານກ່ຽວກັບການແຂ່ງຂັນ - ຍ້ອງຍໍທີ່ສະເໜີໃຫ້ລັດຖະບານພິຈາລະນາ, ຕ້ອງຜ່ານການຄົ້ນຄວ້າພິຈາລະນາຈາກຄະນະຈັດຕັ້ງສູນກາງພັກ ແລະ ການຕົກລົງເຫັນດີຈາກຄະນະຮັບຜິດຊອບຊີ້ນໍາການແຂ່ງຂັນ-ຍ້ອງຍໍລະດັບຊາດຕາມທີ່ໄດ້ກໍານົດໄວ້, ຈາກນັ້ນຈຶ່ງສະເໜີລັດຖະບານພິຈາລະນາ.

4. ບັນດາການຈັດຕັ້ງ ຫຼື ໜ່ວຍງານຕ່າງໆທີ່ເຮັດວຽກໂດຍກົງກັບວຽກງານແຂ່ງຂັນ - ຍ້ອງຍໍມີຄວາມຮັບຜິດຊອບໃນການຄົ້ນຄ້ວາພິຈາລະນາ, ກວດກາບັນດາເອກະສານຕ່າງໆໃຫ້ລະອຽດແລ້ວຈຶ່ງນໍາສະເໜີຂັ້ນເທິງພິຈາລະນາ.

**ມາດຕາ 49. ຂັ້ນຕອນ ແລະ ການປະກອບເອກະສານເພື່ອສະເໜີການຍ້ອງຍໍ**

1. ກ່ຽວກັບສໍານວນເອກະສານເພື່ອສະເໜີການຍ້ອງຍໍປະກອບມີ :

- ບົດລາຍງານກ່ຽວກັບຜົນງານຂອງບຸກຄົນ ແລະ ກົມກອງລວມໝູ່.
- ເອກະສານສະເໜີຂອງຄະນະກໍາມະການຮັບຜິດຊອບບັ້ນແຂ່ງຂັນຂອງກະຊວງ,ອົງການ, ນະຄອນ ແລະ ແຂວງ.
- ບົດບັນທຶກ ແລະ ເອກະສານຮັບຮອງກ່ຽວກັບຂະບວນການແຂ່ງຂັນ.
- ສໍາລັບການສະເໜີຫຼຽນໄຊພັດທະນາ, ຫຼຽນກາພັດທະນາຕ້ອງມີບົດບັນທຶກ ຫຼື ບົດເຊັນສັນຍາການລົງທືນ ຫຼື ການຊ່ວຍເຫລືອລ້າ, ເດີວີໂຄງການ, ຮູບພາບໂຄງການ ແລະ ອື່ນໆ.
- ໃບສະເໜີຂອງລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ,ເຈົ້າຄອງນະຄອນ, ເຈົ້າແຂວງ.

2. ກໍລະນີສະເໜີຮູບການຍ້ອງຍໍຂອງລັດຖະບານກ່ຽວກັບຫຼຽນໄຊ, ຫຼຽນກາ, ໃບຍ້ອງຍໍ, ທຸງໄຊແຂ່ງຂັນ, ນາມມະຍົດຕ່າງໆຂອງບຸກຄົນ ແລະ ກົມກອງລວມໝູ່ທີ່ມີສາຍຕັ້ງຕ້ອງມີຄໍາເຫັນຂອງລັດຖະມົນຕີ ຫຼື ຫົວໜ້າສໍານັກງານອົງການ ຫຼື ຄໍາເຫັນຂອງເຈົ້າຄອງນະຄອນ, ເຈົ້າແຂວງເສຍກ່ອນ.

3. ສໍານວນເອກະສານສ່ວນບຸກຄົນ ແລະ ກົມກອງລວມໝູ່ປະກອບມີ :

- ປະຫວັດຫຍໍ້ຂອງບຸກຄົນ ແລະ ກົມກອງລວມໝູ່
- ບົດລາຍງານຜົນງານຂອງບຸກຄົນ ແລະ ກົມກອງລວມໝູ່
- ໃບຢັ້ງຢືນຜົນງານຈາກການຈັດຕັ້ງ.
- ໃບສະເໜີເພື່ອຂໍການຍ້ອງຍໍຂອງການຈັດຕັ້ງແຕ່ລະຂັ້ນ.
- ຂໍ້ມູນຫຼັກຖານເປັນເອກະສານ ແລະ ຮູບພາບຕ່າງໆ.

## ໝວດທີ VII.
## ການນໍາໃຊ້ສິ່ງຍ້ອງຍໍ, ຂໍ້ຫ້າມ ແລະ
## ມາດຕະການຕໍ່ຜູ້ລະເມີດວຽກງານແຂ່ງຂັນ-ຍ້ອງຍໍ.

**ມາດຕາ 50. ການນໍາໃຊ້ສິ່ງຍ້ອງຍໍ**

1. ສິ່ງຍ້ອງຍໍເປັນວັດຖຸທີ່ມີຄຸນຄ່າ ຊຶ່ງໄດ້ລະລຶກຄຸນງາມຄວາມດີ,ຜົນງານຂອງບຸກຄົນ ແລະ ການ ຈັດຕັ້ງໃນແຕ່ລະໄລຍະ.

2. ບຸກຄົນ ແລະ ການຈັດຕັ້ງທີ່ໄດ້ຮັບການຍ້ອງຍໍຕ້ອງມີຄວາມຮັບຜິດຊອບປົກປັກຮັກສາວັດຖຸຍ້ອງຍໍ ແລະ ນຳໃຊ້ສິ່ງຍ້ອງຍໍໃຫ້ຖືກຕ້ອງ.

**ມາດຕາ 51. ຂໍ້ຫ້າມ**

1. ຫ້າມບໍ່ໃຫ້ຈັດຕັ້ງການແຂ່ງຂັນ-ຍ້ອງຍໍທີ່ມີລັກສະນະສວຍໃຊ້ຮູບການແຂ່ງຂັນ-ຍ້ອງຍໍເພື່ອຜົນປະໂຫຍດຂອງບຸກຄົນ ຫຼື ກຸ່ມຄົນໃດໜຶ່ງ.

2. ຫ້າມບໍ່ໃຫ້ກີດຂວາງ ຫຼື ບີບບັງຄັບຂະບວນການແຂ່ງຂັນ.

3. ຫ້າມບໍ່ໃຫ້ບຸກຄົນ, ການຈັດຕັ້ງລາຍງານຜົນງານບິດເບືອນຈາກຄວາມເປັນຈິງ, ຫ້າມປອມແປງເອກະສານ ແລະ ຫ້າມການຢັ້ງຢືນທີ່ຜິດຕໍ່ລະບຽບກົດໝາຍເພື່ອສະເໜີການຍ້ອງຍໍ.

4. ຫ້າມບໍ່ໃຫ້ສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ ແລະ ໜ້າທີ່ເພື່ອສະເໜີ ຫຼື ຕົກລົງການຍ້ອງຍໍຕໍ່ບຸກຄົນ ແລະການຈັດຕັ້ງ.

5. ຫ້າມບໍ່ໃຫ້ຟຸມເຟືອຍວັດຖຸ, ງົບປະມານຂອງລວມໝູ່, ຂອງລັດຕໍ່ການແຂ່ງຂັນ-ຍ້ອງຍໍ.

6. ຫ້າມບໍ່ໃຫ້ຢືມສິ່ງຍ້ອງຍໍໃຫ້ບຸກຄົນ ຫຼື ການຈັດຕັ້ງອື່ນເພື່ອນຳໃຊ້ໃນທາງທີ່ຜິດກົດໝາຍ.

7. ຫ້າມບໍ່ໃຫ້ບຸກຄົນ, ການຈັດຕັ້ງພາຍໃນປະເທດ ; ບຸກຄົນ, ການຈັດຕັ້ງຂອງຄົນລາວຢູ່ຕ່າງປະເທດຮັບການຍ້ອງຍໍຈາກຕ່າງປະເທດ(ນັບແຕ່ຍ້ອງຍໍຂັ້ນລັດຖະບານຂຶ້ນໄປ), ກ່ອນຈະຮັບການຍ້ອງຍໍຈາກຕ່າງປະເທດແຕ່ຂັ້ນລັດຖະບານຂຶ້ນໄປ, ຕ້ອງລາຍງານຂໍຄວາມເຫັນຈາກລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວເສຍກ່ອນ.

**ມາດຕາ 52. ມາດຕະການຕໍ່ຜູ້ລະເມີດວຽກງານແຂ່ງຂັນ-ຍ້ອງຍໍ**

1. ບຸກຄົນໃດ, ການຈັດຕັ້ງໃດຫາກລາຍງານປອມແປງຜົນງານ, ປອມແປງເອກະສານ, ລາຍງານຜິດຄວາມຈິງ, ໃຫ້ຄວາມສະດວກແກ່ຜູ້ອື່ນເພື່ອສະເໜີການຍ້ອງຍໍ, ຂໍນາມມະຍົດໃນຮູບການຕ່າງໆຈະຖືກປັບໄໝ, ລົງວິໄນທາງບໍລິຫານ, ດຳເນີນຄະດີຕາມກົດໝາຍ, ລຶບລ້າງຂໍ້ຕົກລົງ ແລະ ຮິບວັດຖຸ, ເງິນຄຳທີ່ໄດ້ມອບໃຫ້ນັ້ນຄືນໃຫ້ຄົບຕາມຈຳນວນ.

2. ບຸກຄົນ ແລະ ນິຕິບຸກຄົນໃດຫາກສວຍໃຊ້ໜ້າທີ່ ແລະ ສິດອຳນາດເພື່ອຕົກລົງການຍ້ອງຍໍທີ່ຂັດກັບກົດໝາຍຈະຖືກປັບໄໝ, ລົງວິໄນທາງບໍລິຫານ ແລະ ດຳເນີນຄະດີຕາມກົດ ໝາຍ.

3. ບຸກຄົນໃດ ແລະ ການຈັດຕັ້ງໃດຫາກໄດ້ຢືມ ຫຼື ຊື້ຂາຍສິ່ງຍ້ອງຍໍໃຫ້ບຸກຄົນ ຫຼື ການຈັດຕັ້ງອື່ນເພື່ອນຳໃຊ້ໃນທາງທີ່ຜິດກົດໝາຍແມ່ນຈະຖືກປັບໄໝ, ລົງວິໄນທາງບໍລິຫານ ແລະ ດຳເນີນຄະດີຕາມກົດໝາຍ.

4. ບຸກຄົນ, ກົມກອງລວມໝູ່ໃດຫາກໄດ້ມອບຫຼຽນຄຳແຫ່ງຊາດ, ນາມມະຍົດວິລະຊົນແຫ່ງຊາດ, ນາມມະຍົດວິລະຊົນແຮງງານ, ຫຼຽນໄຊອິດສະຫຼະຊັ້ນ I , ຫຼຽນໄຊແຮງງານຊັ້ນ I, ນາມມະຍົດນັກຮົບແຂ່ງຂັນແຫ່ງຊາດ, ນາມມະຍົດຄູແຫ່ງຊາດ, ນາມມະຍົດສິລະປິນແຫ່ງຊາດ, ນາມມະຍົດແພດແຫ່ງຊາດ, ນາມມະຍົດຄູປະຊາຊົນ, ນາມມະຍົດສິລະປິນດີເດັ່ນ, ນາມມະຍົດແພດປະຊາຊົນ, ນາມມະຍົດນັກຮົບແຂ່ງຂັນແຮງງານດີເດັ່ນແຫ່ງຊາດ, ທຸງໄຊແຂ່ງຂັນຂັ້ນລັດຖະບານ, ແຕ່ບຸກຄົນ ຫຼື ກົມກອງລວມໝູ່ນັ້ນຫາກລະເມີດກົດໝາຍ, ຖືກດຳເນີນຄະດີ ຫຼື ຖືກສານຕັດສິນລົງໂທດໃນສະຖານໃດກໍ່ ຕາມຈະຖືກຖອນນາມມະຍົດ, ຖອນຫຼຽນຄຳ, ຫຼຽນໄຊ ແລະ ທຸງໄຊຄືນ.

5. ບຸກຄົນ ແລະ ການຈັດຕັ້ງພາຍໃນປະເທດ ; ບຸກຄົນ ແລະ ການຈັດຕັ້ງຂອງຄົນລາວຢູ່ຕ່າງປະເທດຫາກໄດ້ລະເມີດດຳລັດສະບັບນີ້ຕາມທີ່ໄດ້ລະບຸໄວ້ຢູ່ໃນ ຂໍ້ 7, ມາດຕາ 51 ຂອງດຳລັດສະ

ບັບນີ້ຖືວ່າມີຄວາມຜິດທາງອາຍາ.

## ໝວດທີ VIII.

## ການຄຸ້ມຄອງ ແລະ ອົງການຄຸ້ມຄອງວຽກງານແຂ່ງຂັນ-ຍ້ອງຍໍ.

### ມາດຕາ 53. ການຄຸ້ມຄອງວຽກງານແຂ່ງຂັນ-ຍ້ອງຍໍ

1. ລັດປະກາດໃຊ້ບັນດານິຕິກຳກ່ຽວກັບວຽກງານແຂ່ງຂັນ-ຍ້ອງຍໍ
2. ລັດຄຸ້ມຄອງວຽກງານແຂ່ງຂັນ-ຍ້ອງຍໍເປັນເອກະພາບໃນຂອບເຂດທົ່ວປະເທດ
3. ລັດຖະບານຈະໄດ້ກຳນົດພາລະບົດບາດ, ສິດໜ້າທີ່ ແລະ ຂອບເຂດຄວາມຮັບຜິດຊອບຂອງກົງຈັກທີ່ເຮັດວຽກໂດຍກົງກັບວຽກງານແຂ່ງຂັນ-ຍ້ອງຍໍຢູ່ແຕ່ລະຂັ້ນ.
4. ລັດກຳນົດກ່ຽວກັບຮູບແບບ, ສີສັນ, ຂະໜາດ, ຄຸນນະພາບຂອງວັດຖຸ, ຮູບຊົງຂອງຫຼຽນຄຳແຫ່ງຊາດ, ຫຼຽນໂພໄຊລ້ານຊ້າງ, ຫຼຽນກຽດຕິຄຸນ, ບັນດາຫຼຽນໄຊ, ຫຼຽນກາຫຸກປະເພດ, ນາມມະຍົດຕ່າງໆ ແລະ ໃບຍ້ອງຍໍລັດຖະບານ.
5. ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອຳນາດການປົກຄອງທ້ອງຖິ່ນຄຸ້ມຄອງວຽກງານແຂ່ງຂັນ - ຍ້ອງຍໍຕາມສິດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

### ມາດຕາ 54. ອົງການຄຸ້ມຄອງວຽກງານແຂ່ງຂັນ-ຍ້ອງຍໍ

ກ. ຢູ່ສູນກາງປະກອບມີບັນດາອົງການດັ່ງນີ້ :

1. ຄະນະຮັບຜິດຊອບຊີ້ນຳການແຂ່ງຂັນ-ຍ້ອງຍໍລະດັບຊາດ.
2. ຄະນະຈັດຕັ້ງສູນກາງພັກ ຫຼື ອົງການທີ່ກົມການເມືອງ, ຄະນະເລຂາທິການສູນກາງພັກແລະລັດຖະບານມອບສິດ.
3. ສະຖາບັນແຂ່ງຂັນ-ຍ້ອງຍໍແຫ່ງຊາດ.

ຂ. ຢູ່ອ້ອມຂ້າງສູນກາງ: ປະກອບມີຄະນະຮັບຜິດຊອບວຽກງານແຂ່ງຂັນ - ຍ້ອງຍໍຂັ້ນກະຊວງ, ອົງການ ແລະ ມີໜ່ວຍງານຮັບຜິດຊອບວຽກງານແຂ່ງຂັນ - ຍ້ອງຍໍ.

ຄ. ຢູ່ທ້ອງຖິ່ນ: ປະກອບມີຄະນະຮັບຜິດຊອບວຽກງານແຂ່ງຂັນ - ຍ້ອງຍໍຂັ້ນນະຄອນ, ແຂວງ, ເມືອງແລະ ມີໜ່ວຍງານຮັບຜິດຊອບວຽກງານແຂ່ງຂັນ-ຍ້ອງຍໍ.

### ມາດຕາ 55. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງວຽກງານແຂ່ງຂັນ-ຍ້ອງຍໍ

1. ມີສິດ ແລະ ໜ້າທີ່ຊ່ວຍລັດຖະບານກ່ຽວກັບການຄຸ້ມຄອງວຽກງານແຂ່ງຂັນ - ຍ້ອງຍໍທົ່ວປະເທດ.
2. ຄົ້ນຄ້ວາວາງແນວທາງວຽກງານແຂ່ງຂັນ-ຍ້ອງຍໍ.
3. ໂຄສະນາ,ເຜີຍແຜ່,ແນະນຳ ແລະ ຈັດຕັ້ງປະຕິບັດບັນດາຂໍ້ກຳນົດວຽກງານແຂ່ງຂັນ-ຍ້ອງຍໍ.
4. ຄົ້ນຄ້ວາອອກແບບຫຼຽນແຕ່ລະປະເພດ ຫຼື ນາມມະຍົດຕ່າງໆ, ໃບຍ້ອງຍໍພ້ອມທັງກວດຜ່ານ, ຮັບຮອງບັນດາຫຼຽນ ຫຼື ນາມມະຍົດ ແລະ ໃບຍ້ອງຍໍຕ່າງໆໃນຂອບເຂດທົ່ວປະເທດ.

5. ກໍ່ສ້າງ, ບຳລຸງພະນັກງານທີ່ເຮັດວຽກງານແຂ່ງຂັນ-ຍ້ອງຍໍ.

6. ສະຫຼຸບຕີລາຄາວຽກງານແຂ່ງຂັນ-ຍ້ອງຍໍ ແລະ ພິຈາລະນາບັນດາຮູບການຍ້ອງຍໍເພື່ອສະເໜີຂັ້ນເທິງພິຈາລະນາ.

7. ຮ່ວມມືກັບບັນດາອົງການຈັດຕັ້ງສາກົນກ່ຽວກັບວຽກງານແຂ່ງຂັນ-ຍ້ອງຍໍ.

8. ຊຸກຍູ້, ຕິດຕາມ, ກວດກາ, ຕີລາຄາປະເມີນຜົນວຽກງານແຂ່ງຂັນ-ຍ້ອງຍໍ .

9. ຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ມີມາດຕະການຕໍ່ຜູ້ລະເມີດວຽກງານແຂ່ງຂັນ- ຍ້ອງຍໍ.

10. ຄົ້ນຄ້ວາ, ພິຈາລະນາວຽກງານຕ່າງໆໃນຂົງເຂດວຽກງານແຂ່ງຂັນ-ຍ້ອງຍໍ.

**ມາດຕາ 56. ຄັງສຳລັບໃຊ້ຈ່າຍເຂົ້າໃນວຽກງານແຂ່ງຂັນ-ຍ້ອງຍໍ**

ຄັງທີ່ໃຊ້ຈ່າຍເຂົ້າໃນວຽກງານແຂ່ງຂັນ-ຍ້ອງຍໍແມ່ນມາຈາກງົບປະມານຂອງລັດ, ມາຈາກການຊ່ວຍເຫຼືອຂອງບຸກຄົນ ແລະ ການຈັດຕັ້ງພາຍໃນປະເທດ ; ມາຈາກການຊ່ວຍເຫຼືອຂອງການຈັດຕັ້ງ ແລະ ບຸກຄົນຂອງຕ່າງປະເທດ ແລະ ມາຈາກຮ່ວງອື່ນໆຕາມລະບຽບຂອງກົດໝາຍ.

## ໝວດທີ IX.
## ບົດບັນຍັດສຸດທ້າຍ

**ມາດຕາ 57. ຜົນສັກສິດຂອງນາມມະຍົດ ແລະ ການຍ້ອງຍໍໃນເມື່ອກ່ອນ**

ລັດປົກປ້ອງນາມມະຍົດ ແລະ ການຍ້ອງຍໍຕ່າງໆທີ່ໄດ້ມອບ ຫຼື ປະດັບກ່ອນດຳລັດສະບັບນີ້ຖືກປະກາດໃຊ້.

**ມາດຕາ 58. ການຮັບການຍ້ອງຍໍຂອງຕ່າງປະເທດ**

ບຸກຄົນ ແລະ ການຈັດຕັ້ງພາຍໃນປະເທດ ຫຼື ບຸກຄົນ ແລະ ການຈັດຕັ້ງຂອງຄົນລາວຢູ່ຕ່າງປະເທດກ່ອນຈະຮັບການຍ້ອງຍໍຈາກຕ່າງປະເທດ ( ສຳລັບການຍ້ອງຍໍແຕ່ຂັ້ນລັດຖະບານຂຶ້ນໄປ ) ຕ້ອງໄດ້ລາຍງານຂໍຄວາມເຫັນ ແລະ ໄດ້ຮັບການຕົກລົງເຫັນດີຈາກລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວເສຍກ່ອນ.

**ມາດຕາ 59. ການສືບຕໍ່ວຽກງານແຂ່ງຂັນຍ້ອງຍໍ**

ລັດສືບຕໍ່ພິຈາລະນາ ແລະ ປະຕິບັດການຍ້ອງຍໍຕໍ່ບຸກຄົນ, ການຈັດຕັ້ງທີ່ມີຄຸນງາມຄວາມດີ, ມີຜົນງານຕໍ່ປະເທດຊາດໃນພາລະກິດຕໍ່ສູ້ກູ້ຊາດ, ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 60. ການຊຸກຍູ້, ກວດກາ, ຕີລາຄາວຽກງານແຂ່ງຂັນຍ້ອງຍໍ**

ຄະນະຮັບຜິດຊອບຊີ້ນຳການແຂ່ງຂັນ - ຍ້ອງຍໍລະດັບຊາດ, ຄະນະຈັດຕັ້ງສູນກາງພັກ, ສະຖານບັນແຂ່ງຂັນ - ຍ້ອງຍໍ ແລະ ຄະນະຮັບຜິດຊອບວຽກງານແຂ່ງຂັນ - ຍ້ອງຍໍຢູ່ແຕ່ລະຂັ້ນມີໜ້າທີ່ ແລະ ຄວາມຮັບຜິດຊອບໃນການພິຈາລະນາ, ກວດກາບັນດາເອກະສານຕ່າງໆທີ່ພົວພັນເຖິງວຽກງານແຂ່ງຂັນ - ຍ້ອງຍໍໃຫ້ຄົບຖ້ວນກ່ອນຈະສະເໜີຂັ້ນເທິງພິຈາລະນາ, ພ້ອມກັນນັ້ນຕ້ອງຕິດຕາມ, ຊຸກຍູ້, ກວດກາ, ຕີລາຄາວຽກງານແຂ່ງຂັນ-ຍ້ອງຍໍເປັນແຕ່ລະໄລຍະ.

**ມາດຕາ 61. ຈັດຕັ້ງຜັນຂະຫຍາຍ**

ມອບໃຫ້ສະຖາບັນແຂ່ງຂັນ-ຍ້ອງຍໍເປັນເສນາທິການຊ່ວຍຄົ້ນຄ້ວາ,ແນະນໍາໃຫ້ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນຈັດຕັ້ງປະຕິບັດ, ຄົ້ນຄວ້າຮູບແບບວັດຖຸຍ້ອງຍໍປະເພດຕ່າງໆຕາມຄວາມເໝາະສົມເພື່ອນໍາໃຊ້ເຂົ້າໃນວຽກງານແຂ່ງຂັນ - ຍ້ອງຍໍໃຫ້ແທດເໝາະ, ອຸດົມສົມບູນດ້ວຍຫຼາຍຮູບແບບ ແລະ ຫລາຍສີສັນ.

**ມາດຕາ 62. ຜົນສັກສິດ**

ດໍາລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 24 / 2 / 2010

**ນາຍົກລັດຖະມົນຕີແຫ່ງ ສ ປ ປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ນາຍົກລັດຖະມົນຕີ

ບົວສອນ ບຸບຜາວັນ